ການປູກຜັກໃນເຮືອນຮົ່ມ



ປູກຜັກໃນເຮືອນມຸ້ງ



ປູກຜັກໃນເຮືອນຮົ່ມທີ່ມຸງດ້ວຍຜ້າຢາງ



ປູກຜັກໃນເຮືອນຮົ່ມທີ່ມຸງດ້ວຍຜ້າຢາງ



**ສະຖານທີ່ໆເໝາະສົມໃນການປຸກເຮືອນຮົ່ມປູກຜັກລະດູຝົນ:**

1. ຕ້ອງເປັນບ່ອນທີ່ມີພື້ນທີ່ໆຮາບພຽງດີ, ແຕ່ບໍ່ມີນ້ຳຂັງ, ບໍ່ມີຕົ້ນໄມ້ໃຫ່ຍຢູ່ໄກ້, ບໍ່ແມ່ນບ່ອນທີ່ຈະມີການກໍ່ສ້າງຫ້ອງການ ຫຼື ອື່ນໆໃນອານາຄົດ ແລະ ບໍ່ໃກ້ກັບຫ້ອງການ.
2. ສະພາບດິນ ຕ້ອງເປັນດິນທີ່ອຸດົມສົມບູນ, ບໍ່ມີຫີນ.
3. ຕ້ອງມີແສງແດດສ່ອງຕະຫຼອດວັນ.

**ຂະໜາດຂອງເຮືອນຮົ່ມ:**

ສຸດແລ້ວແຕ່ຄວາມເໝາະສົມ ຕາມພື້ນທີ່, ຄວາມສາມາດ ເຮັດໄດ້ຂອງຜູ້ຮັບຜິດຊອບ ແລະ ຕາມຈຸດປະສົງຂອງການຜະລິດ. ແຕ່ຂະໜາດທີ່ເຮົາຈະເຮັດແມ່ນ 16 ແມັດ x 5 ແມັດ, ສູງ 2,5 ແມັດ.

**ການປຸກສ້າງເຮືອນຮົ່ມ:**

ແມ່ນນຳໃຊ້ອຸປະກອນທີ່ຫາໄດ້ງ່າຍໃນທ້ອງຖິ່ນຂອງຕົນ ເພື່ອເປັນການປະຢັດຕົ້ນທຶນ ອຸປະກອນທີ່ໃຊ້ໃນການປຸກສ້າງເຮືອນຮົ່ມ ມີຄື: ໄມ້ເຮັດເສົາ, ໄມ້ສ້າງໄພ, ເຫຼັກຕາປູ, ລວດ, ຜ້າແຍ່ງສຳລັບມຸງ. ການປຸກແມ່ນຂຶ້ນກັບທຶນທີ່ມີ ຖ້າບໍ່ມີທຶນຫຼາຍກໍ່ນຳໃຊ້ອຸປະກອນທີ່ຫາໄດ້ງ່າຍມຸງກໍ່ໄດ້ເຊັ່ນ: ໃຊ້ໃບພ້າວ, ໃບຕານ ແລະ ອື່ນໆ.




**ການເຮັດໜານ:**

ການເຮັດໜານປູກຜັກໃນເຮືອນຮົ່ມ ເຮົາຕ້ອງໄດ້ເຮັດຂອບໜານ, ຍົກໜານໃຫ້ສູງປະມານ 25-30 ຊຕມ. ເພາະວ່າການປູກໃນຊ່ວງລະດູຝົນ ຈະສາມາດລະບາຍນ້ຳໄດ້ດີ. ອຸປະກອນ ໃນການເຮັດຂອບໜານແມ່ນມີຫຼາຍຊະນິດເຊັ່ນ: ໃຊ້ໄມ້ໄຜ່, ດິນບລອກ ແລະ ອື່ນໆ. ຂະໜາດຂອງໜານ ແມ່ນກ້ວາງ 1 ແມັດ, ຄວາມຍາວແມ່ນຂຶ້ນກັບຄວາມຕ້ອງການ ແລະ ຂະໜາດຂອງເຮືອນຮົ່ມທີ່ເຮົາສ້າງ, ການເຮັດໜານໃນເຮືອນຮົ່ມແມ່ນເຮັດ 2 ແຖວ ໂດຍຈົ່ງທາງຍ່າງໄວ້ກາງ.

**ການປະສົມດິນເຂົ້າໜານ:**

ເອົາດິນທີ່ອຸດົມສົມບູນ ມາປະສົມກັບແກບເຜົາປະມານ70% ແລະ ຝຸ່ນຄອກ(ຂີ້ງົວ) ໃນອັດຕາສ່ວນ 3:1:3 ( ດິນ 3 ສ່ວນ, ຝຸ່ນຄອກ 1 ສ່ວນ ແລະ ແກບເຜົາ 3 ສ່ວນ ) ປະສົມເຂົ້າກັນໃຫ້ລະອຽດ ແລ້ວ ນຳມາໃສ່ໜານ, ແປງໜານໃຫ້ພຽງດີ ແລ້ວນຳເອົາເມັດພັນທີ່ກຽມໄວ້ນັ້ນມາ

ຫ່ວານ ໃຫ້ສະເໝີ, ການຫ່ວານຖີ່ ຫຼື ຫ່າງແມ່ນຂຶ້ນກັບຊະນິດ ຂອງເມັດພັນ ແລະ ປະເພດຜັກທີ່ປູກ.

## ການປູກຜັກສຳລັບຄອບຄົວ ( ການປູກຜັກຊີວະພາບ )



1. <u>**ຄວາມເປັນມາ ແລະ ສາເຫດ.**</u>

ປະຊາຊົນລາວສ່ວນຫຼວງຫຼາຍເຄີຍກິນຜັກ ແລະ ປຸງແຕ່ງອາຫານທຸກວັນ, ຜັກສ່ວນຫຼາຍແມ່ນຫາເກັບເອົາຕາມທຳມະຊາດ ຈາກໄຮ່ ແລະ ສວນຕາມແຄມແມ່ນ້ຳໃນຍາມລະດູໜາວ. ສະນັ້ນຈຶ່ງບໍ່ມີຜັກກິນຢ່າງພຽງພໍ, ເດັກນ້ອຍຂາດທາດວິຕາມິນ ສຸຂະພາບບໍ່ສົມບູນຕາມໄວອາຍຸ ແລະ ບໍ່ມີລາຍໄດ້ເພີ່ມໃຫ້ແກ່ຄອບຄົວໃນການຂາຍຜັກ.

2. <u>**ຄວາມໝາຍ ແລະ ຄຸນປະໂຫຍດຂອງສວນຄົວຊີວະພາບ.**</u>

2.1. <u>ຄວາມໝາຍ.</u>

ສວນຄົວຊີວະພາບ ແມ່ນສວນຄົວເພື່ອສຸຂະພາບ, ຄວາມຕ້ອງການ ໃນການບໍລິໂພກຂອງຄົນໃນຄອບຄົວ ໂດຍສະເພາະດ້ານພືດຜັກ ແລະ ໝາກໄມ້ທີ່ປູກເອງ ໂດຍບໍ່ໄດ້ນຳໃຊ້ຝຸ່ນເຄມີ, ບໍ່ໄດ້ໃຊ້ທຶນສູງ ແລະ ເນື້ອທີ່ກ້ວາງຂວາງ, ມີເນື້ອທີ່ພຽງເລັກນ້ອຍກໍສາມາດສ້າງເປັນສວນຄົວໄດ້, ( ສວນຄົວແມ່ນການຜະລິດຢູ່ໃກ້ເຮືອນ, ຕ້ອງມີຮົ້ວທີ່ດີ, ມີຄົນປົວລະບັດຮັກສາ ແລະ ສວນຄົວຍັງເຮັດໃຫ້ມີຊີວິດການເປັນຢູ່ທີ່ດີຂື້ນທາງດ້ານສຸຂະພາບ ແລະ ເສດຖະກິດຄອບຄົວ ).

2.2. <u>ຄຸນປະໂຫຍດຂອງສວນຄົວຊີວະພາບ.</u>

ສວນຄົວຊີວະພາບມີຄຸນປະໂຫຍດດັ່ງນີ້:

- ເຮັດໃຫ້ຄອບຄົວມີຜັກ ແລະ ໝາກໄມ້ຊະນິດຕ່າງໆກິນຕະຫຼອດປີ, ເສີມສ້າງໃຫ້ຮ່າງກາຍມີສຸຂະພາບແຂງແຮງຕ້ານທານຕໍ່ພະຍາດໄດ້.

- ຊ່ວຍຫຼຸດຜ່ອນການໄປຫາເກັບຜັກຕາມທຳມະຊາດທ່າງໄກມາກິນດ້ວຍຄວາມລຳບາກ ແລະ ມີເວລາເບິ່ງແຍງລູກຫຼານເພີ່ມຂຶ້ນ.

- ໃນສວນຄົວມີພືດຜັກ ແລະ ໝາກໄມ້ຫຼາຍຊະນິດທີ່ພວກເຮົານຳມາປຸງແຕ່ງອາຫານປະຈຳວັນ ຊ່ວຍປະຢັດລາຍຈ່າຍ ແລະ ສາມາດຂາຍເພີ່ມລາຍໄດ້ໃຫ້ແກ່ຄອບຄົວ.

- ການປຸງແຕ່ງອາຫານ ປະຈຳວັນ ດ້ວຍຜັກຫຼາຍປະເພດ ເຮັດໃຫ້ອາຫານມີລົດຊາດແຊບນົວດີ ມີຄຸນນະພາບທາງດ້ານອາຫານສູງ.

- ການທີ່ມີສວນຄົວຢູ່ໃກ້ບ້ານເຮັດໃຫ້ເດັກໄດ້ຮຽນຮູ້ເລື່ອງການປູກຜັກແຕ່ຍັງນ້ອຍ.

- ຊ່ວຍຝຶກຝົນອົບຮົມຈິດໃຈຂອງເດັກໃຫ້ຮັກ ແລະ ຮູ້ເຮັດສວນຄົວເພື່ອຊ່ວຍເຫຼືອຕົນເອງ.

- ສ້າງນິໄສໃຫ້ເດັກເປັນຄົນດຸໝັ່ນອອກແຮງງານ, ອອກກຳລັງກາຍເພື່ອເສີມສ້າງຮ່າງກາຍໃຫ້ແຂງແຮງ ສົມບູນ.

3. **ສະຖານທີ່ເຮັດສວນຄົວຊີວະພາບ.**

- ສະຖານທີ່ເຮັດສວນຄົວຊີວະພາບບໍ່ຈຳເປັນມີເນື້ອທີ່ກ້ວາງຂວາງ ພວກເຮົາມີເນື້ອທີ່ພຽງແຕ່ 20 - 50 ຕະລາງແມັດກໍ່ສາມາດປູກຜັກ, ໝາກໄມ້ ກຸ້ມຄອບຄົວໜຶ່ງໄດ້.

- ຢູ່ໃກ້ເຮືອນ ແລະ ມີແຫຼ່ງນ້ຳ ເຊັ່ນ: ນ້ຳສ້າງ, ຄ່ອງນ້ຳ, ໜອງ.....

- ບໍ່ເປັນໂນນສູງເກີນໄປ.

4. **ວັດຖຸ ແລະ ເຄື່ອງມື.**

- ວັດຖຸ ແລະ ເຄື່ອງມືນຳມາໃຊ້ໃນການເຮັດສວນຄົວຊີວະພາບລ້ວນແຕ່ແມ່ນສິ່ງທີ່ມີລາຄາບໍ່ແພງ ແລະ ຫາໄດ້ງ່າຍໃນທ້ອງຖິ່ນ ເຊັ່ນ:

4.1. ວັດຖຸ

- ຝຸ່ນຄອກ, ຝຸ່ນບົ່ມ, ເຟືອງ, ຂີ້ເຖົ່າ, ຂີ້ແກບ, ພືດໃຊ້ສຳລັບຂ້າແມງໄມ້ ແລະ ເຮັດເປັນຮົ້ວຊີວະພາບ.

4.2. ເຄື່ອງມື

- ຈົກ, ຊ້ວານ, ພ້າ, ມີດ, ຄາດ, ສຽມ ເປັນເຄື່ອງໃຊ້ປະຈຳວັນທີ່ເຮົາມີຢູ່ແລ້ວ.

5. **ການວາງແປງໃນການປູກຜັກສວນຄົວ.**

5.1. ແນວພັນ.

ສວນຄົວຊີວະພາບ ພວກເຮົາສາມາດປູກຜັກໄດ້ຫຼາຍຊະນິດ ຄື: ຜັກກາດ, ຜັກສະຫຼັດ, ຜັກຫອມປ້ອມ, ຫອມບົ່ວ, ຜັກຊີ ແຕ່ຜັກເຫຼົ່ານີ້ມີອາຍຸສັ້ນ ປູກໄດ້ຮັບຜົນດີໃນລະດູໜາວ ແລະ ພືດທີ່ກຸ້ມດິນປູກເທື່ອໜຶ່ງເກັບກິນໄດ້ຫຼາຍເທື່ອ ເຊັ່ນ: ຜັກທົ່ມ, ຜັກບົ້ງ, ຜັກປັງ, ຜັກຫວານ, ຜັກບົ່ວເລີຍ, ຜັກກະຖິນ, ຜັກໜອກ, ໝາກຖົ່ວພູ, ໝາກຖົ່ວແຮ, ໝາກເຜັດ, ຫົວສີໄຄ, ຂ່າ, ຂີງ, ມັນດ້າງ, ຜັກຕຳນິນ, ຜັກອີເລີດ, ໝາກແປບ, ທູນ ແລະ ພືດເຫຼົ່ານີ້ແມ່ນເໝາະສົມໃນການປູກໃສ່ສວນຄົວ ເພາະເກັບກິນໄດ້ຕະຫຼອດປີ.

#        ການຈັດວາງແນວພັນຜັກທີ່ປູກໃນສວນຄົວຊີວະພາບ.

| | | | |
|---|---|---|---|
| ຜັກກາດ | ຜັກບົ້ງ | ຫອມປ້ອມ | ຜັກຕຳນິນ |
| ຜັກບົ່ວ | ຜັກຊີ | ຜັກສະຫຼັດ | ຜັກປັງ |
| ທົ່ວສີໄຄ | ທົ່ວຂ່າ | ຕົ້ນຫູນ | ໝາກແປບ |
| ຝຸ່ນຄອກ | ເຟືອງ | ຂີ້ແກບ | ກອງຝຸ່ນບົ່ມ |

6. **ການກຽມດິນ ແລະ ວິທີປູກພືດສວນຄົວຊີວະພາບ.**

6.1. ການກຽມດິນ.

ຂຸດດິນໃຫ້ເລິກສອງຊື່ວບາດຈິກ ແລ້ວຄົນດິນປົນກັບຝຸ່ນບົ່ມ, ຝຸ່ນຄອກ ຫຼື ເສດພືດ ແລະ ຂີ້ແກບ ແລ້ວແປງເປັນໜານ, ການກຽມດິນປູກພືດແບບນີ້ຊ່ວຍໃຫ້ນ້ຳຊຶມລົງໄປໃນດິນໄດ້ດີ, ເຮັດໃຫ້ດິນມີຄວາມຊຸມດິນ, ຮາກພືດຂະຫຍາຍຕົວໄດ້ດີ ແລະ ພືດກໍຈະຊຽວງານຕະຫຼອດປີ.

6.2. ການກ້າເບ້ຍ.

ການກ້າເບ້ຍຜັກຫຼືພືດຕ່າງໆ ເພື່ອນຳໄປປູກມີຫຼາຍວິທີ ອີງຕາມຄວາມເໝາະສົມຂອງພືດແຕ່ລະຊະນິດເຊັ່ນ:

- ການກ້າໃສ່ໜານ: ລວມມີຜັກກາດ, ຜັກສະຫຼັດ, ຜັກກະລຳປີ, ໝາກເຜັດ, ໝາກເຂືອ....

+ ວິທີກ້າ: ຂຸດດິນໃຫ້ເລິກປະມານ ໜຶ່ງບາດຈິກ ແລ້ວແປງເປັນໜານກ້ວາງ 1 ແມັດ, ຍາວຕາມຄວາມເໝາະສົມ. ເອົາຝຸ່ນບົ່ມ ຫຼື ຝຸ່ນຄອກຄົນປົນກັບດິນ, ແປງໜານໃຫ້ລະອຽດ, ເອົາແກ່ນພືດໂຮຍໃສ່, ເອົາຝຸ່ນຄອກໂຮຍປົກບາງໆ ຫົດນ້ຳໃຫ້ຊຸ່ມ ແລ້ວເອົາເຟືອງ ຫຼື ຫຍ້າແຫ້ງ, ຫົດນ້ຳທຸກມື້ເຊົ້າ ແລະ ແລງ, ເມື່ອເບ້ຍຜັກໃຫ່ຍສູງປະມານ 8 - 10 ຊັງຕີແມັດ ( ອີງຕາມແຕ່ລະຊະນິດຂອງພືດ ) ກໍ່ຍ້າຍໄປປູກໃສ່ໜານທີ່ເຮົາກຽມໄວ້.

- ການກ້າເບ້ຍໃສ່ຖົງຢາງ ແລະ ໃສ່ຮາງ: ພືດທີ່ມີລຳຕົ້ນ ຫຼື ພືດທີ່ມີອາຍຸຍາວ ເຊັ່ນ: ໝາກເຜັດ, ໝາກເຂືອ, ໝາກຫຸ່ງ....

+ ວິທີກ້າໃສ່ຖົງຢາງ.

- ເຈາະຖົງຢາງໃຫ້ເປັນຮູ 4 - 5 ຮູ.

- ເອົາດິນທີ່ປະສົມກັບຝຸ່ນຄອກ ຫຼື ຝຸ່ນບົ່ມຍັດໃສ່ຖົງຢາງ, ໃຫ້ປາກຖົງຢາງສູງກ່ວາດິນ ປະມານ 1-2 ນິ້ວມື.

- ເອົາແກ່ນພືດເບັບໃສ່ດີໃນຖົງຢາງ ຖົງລະ 2-3 ແກ່ນ, ແລ້ວນຳໄປໄວ້ບ່ອນທີ່ຮົ່ມ.

- ຫົດນ້ຳທຸກວັນ, ເມື່ອເມັດພືດແຕກງອກໄດ້ 7 ວັນ ແລ້ວໃຫ້ລົກເບ້ຍພືດທີ່ບໍ່ແຂງແຮງ ອອກ, ຈິ່ງໄວ້ຖົງລະ 1 ເບ້ຍ.

- ເມື່ອເບ້ຍພືດໃຫ່ຍ ແລະ ມີຮາກຫຼາຍກໍ່ນຳໄປປູກໃສ່ດິນທີ່ກຽມໄວ້.

+ ວິທີກ້າໃສ່ຮາງ: ວິທີນີ້ເປັນວິທີທີ່ງ່າຍປະຢັດທີ່ພວກເຮົາໄດ້ນຳໃຊ້ວັດຖຸເສດເຫຼືອໃຫ້ ເປັນປະໂຫຍດ ເຊັ່ນ:

- ເຮັດຮາງໄມ້ ຫຼື ເອົາຄຸ, ຊາມທີ່ໃຊ້ບໍ່ໄດ້ແລ້ວນັ້ນເອົາດິນປະສົມຝຸ່ນຄອກ, ຝຸ່ນບົ່ມໃສ່.

- ເອົາແກ່ນພືດຢາງໃສ່ໃຫ້ຫ່າງປະມານ 3-5 ຊັງຕີແມັດ.

- ຫົດນ້ຳໃຫ້ຊຸ່ມ ແລະ ຫົດນ້ຳທຸກວັນ ເຊົ້າ ຫຼື ແລງ.

- ເມື່ອເບ້ຍພືດໃຫ່ຍສູງປະມານ 10-20 ຊັງຕີແມັດ ກໍສາມາດຍ້າຍໄປປູກໃສ່ດິນທີ່ກຽມ ໄວ້.

6.3. <u>ວິທີປູກພືດສວນຄົວ.</u>

ມີຫຼາຍວິທີອີງຕາມຊະນິດຂອງພືດ ຄື:

+ <u>ປູກດ້ວຍເບ້ຍ:</u>

- ນຳເອົາເບ້ຍພືດທີ່ກ້າໃສ່ໜານ, ຖົງຢາງ ຫຼື ຮາງທີ່ໄດ້ກ້າໄວ້ແລ້ວ, ມີຄວາມສູງປະມານ 8 - 15 ຊັງຕີແມັດ, ກໍນຳໄປກ້າໃສ່ໜານທີ່ກຽມໄວ້ເຊັ່ນ: ຜັກກາດ, ຜັກສະຫຼັດ..., ໄລຍະ ຫ່າງລະຫ່ວາງແຖວ ແລະ ຕົ້ນແມ່ນຂຶ້ນກັບຊະນິດພືດ.

- ບາງຊະນິດກໍປູກໃສ່ຂຸມເຊັ່ນ: ໝາກເຜັດ, ໝາກເຂືອ, ໝາກເລັ່ນ ....

+ <u>ປູກດ້ວຍແກ່ນ.</u>

- ເອົາແກ່ນພືດ ໂຮຍໃສ່ໜານ ໃຫ້ທົ່ວຢ່າງສະໝ່ຳສະເໝີ, ເອົາຝຸ່ນຄອກ ຫຼື ຝຸ່ນບົ່ມປົກ ບາງໆ ແລະ ເອົາເຟືອງປົກບາງໆ ຫຼັງຈາກນັ້ນຫົດນ້ຳໃຫ້ຊຸ່ມດີ, ເມື່ອຜັກໃຫ່ຍ ແລ້ວຫຼົກ ຕົ້ນທີ່ບໍ່ແຂງແຮງອອກໃຫ້ເຫຼືອໄວ້ຫ່າງພໍດີ ເຊັ່ນ: ຜັກກາດ, ຜັກສະຫຼັດ, ຜັກຊີ, ຫອມ ປ້ອມ....

- ຂຸດຂຸມເອົາຝຸ່ນຄອກ ຫຼື ຝຸ່ນບົ່ມ ແລະ ເສດພືດໃສ່ປົນກັບດິນໃນຂຸມ ແລ້ວເອົາແກ່ນ ພືດປູກລົງໃສ່ຂຸມລະ 2-3 ແກ່ນ ແລ້ວຫົດນ້ຳໃຫ້ຊຸ່ມ ເຊັ່ນ: ໝາກເຜັດ, ໝາກເລັ່ນ, ໝາກເຂືອ, ໝາກນ້ຳ, ໝາກບວບ....

+ <u>ປູກດ້ວຍຫົວ ແລະ ລຳຕົ້ນ.</u>

- ປູກດ້ວຍຫົວ: ຂຸດຂຸມເອົາຝຸ່ນຄອກ ຫຼື ຝຸ່ນບົ່ມ ແລະ ເສດພືດໃສ່ປົນກັບດິນໃນຂຸມ ແລ້ວເອົາຫົວພືດລົງປູກເອົາດິນຖົມຫົດນ້ຳໃຫ້ຊຸ່ມ ເມື່ອພືດຕິດດີອອກໃບໃໝ່ ແລ້ວ2-3 ມື້ຫົດນ້ຳເທື່ອໜຶ່ງ ໃນລະດູແລ້ງ ເພາະພືດທີ່ປູກດ້ວຍຫົວ ທົນທານຕໍ່ຄວາມແຫ້ງແລ້ງ ເຊັ່ນ: ຫົວຂ່າ, ຫົວສີໄຄ, ເຜືອກ, ຜັກທຽມ, ຜັກບົ່ວຫົວ ປູກຫ່າງກັນລະຫ່ວາງຕົ້ນ ແລະ ແຖວ 10 - 15 ຊັງຕີແມັດ.

- ປູກດ້ວຍລຳຕົ້ນ ຫຼື ເຄືອ: ມີ 2 ວິທີ.

ວິທີ 1: ຫຼັງຈາກກຽມດິນປູກແລ້ວ ກໍເອົາຕົ້ນ ຫຼື ເຄືອພືດຕັດເປັນທ່ອນປະມານ 15-20 ຊັງຕີແມັດ. ຂຸດຂຸມປູກ ຖົມໃຫ້ຕົ້ນ ຫຼື ເຄືອພົ້ນຈາກໜ້າດິນປະມານ 8-10 ຊັງຕີແມັດ ເຊັ່ນ: ເຄືອຜັກຕຳນິນ, ມັນດ້ານ ..., ບາງຊະນິດກໍເອົາດິນຖົມໝົດເລີຍ ເຊັ່ນ: ອ້ອຍ, ມັນຕົ້ນ, ....

ວິທີ 2: ຕັດຕົ້ນ ຫຼື ເຄືອພືດເປັນທ່ອນ ແລ້ວເອົາມາຊຳໄວ້ບ່ອນຮົ່ມ ແລະ ບ່ອນຊຸ່ມເມື່ອຕົ້ນ ຫຼື ເຄືອພືດອອກຮາກ, ປົ່ງໃບຈຶ່ງນຳໄປປູກໃສ່ດິນທີ່ກຽມໄວ້.

ວິທີໃດກໍຕາມເມື່ອປູກແລ້ວຕ້ອງຫົດນ້ຳທຸກມື້ຈົນໃຫ້ພືດຕິດແລ້ວ ຈຶ່ງບາມື້ຫົດ ຫຼື ສອງມື້ຫົດນ້ຳເທື່ອໜຶ່ງ ( ໃນລະດູແລ້ງ ), ຖ້າແມ່ນລະດູຝົນມີແຕ່ເສຍຫຍ້າ, ໃສ່ຝຸ່ນເທົ່ານັ້ນ ຕົ້ນພືດຈະຂຽວງາມ.

7. <u>ສິ່ງທີ່ຄວນປະຕິບັດໃນການເຮັດສວນຄົວຊີວະພາບ.</u>

ການເຮັດສວນຄົວຊີວະພາບຖ້າເຮົາປະຕິບັດໄດ້ດີຖືກຕາມເຕັກນິກວິທີການຈະຊ່ວຍໃຫ້ຫຼຸດຜ່ອນການໃຊ້ຈ່າຍໃນຄອບຄົວ ແລະ ສ້າງລາຍໄດ້ເພີ່ມໃຫ້ແກ່ຄອບຄົວ. ສະນັ້ນເພື່ອໃຫ້ໄດ້ຮັບຜົນດີເຮົາຕ້ອງປະຕິບັດຕາມເຕັກນິກວິທີການດັ່ງນີ້:

7.1. <u>ວິທີປະຢັດນ້ຳ.</u>

- ຄັດເລືອກແນວພັນທີ່ທົນທານຕໍ່ຄວາມແຫ້ງແລ້ງ ເຊັ່ນ: ຜັກຫົມ, ຜັກຫວານ, ຜັກບົ້ງ, ຜັກຕຳນິນ, ຜັກປັງ, ຜັກນາງເລີດ, ຜັກຫອມເປ, ຫອມລາບ, ຜັກຄາວທອງ, ມັນດ້າງ, ເຜືອກ, ໝາກເຂືອ, ໝາກເຜັດ, ຂີງ, ຂ່າ, ຫົວສີໄຄ...

- ປູກພືດຊັ້ນຮົ່ມກັນຫຼາຍຊັ້ນ ພືດຕ່ຳ ສະຫຼັບກັບພືດສູງ ແລະ ປູກພືດປະເພດເປັນເຄືອຂຶ້ນຮ້ານ ເພື່ອເປັນບ່ອນຮົ່ມໃຫ້ບ່ອນກ້າເບ້ຍ.

- ໃຊ້ເຟືອງ, ໃບໄມ້ແຫ້ງ, ເສດພືດ, ຝຸ່ນບົ່ມ ປົກຄຸມໜ້າດິນໄວ້ ເພື່ອຮັກສາຄວາມຊຸ່ມໃນໜ້າດິນ.

- ຂຸດໜານໃຫ້ເລິກ 2 ຊົ່ວບາດຈົກ, ຄົນດິນໜານປົນກັບຝຸ່ນບົ່ມ, ຝຸ່ນຄອກ ຫຼື ເສດພືດ ເພື່ອໃຫ້ນ້ຳຊືມລົງເລິກ ແລະ ສາມາດເກັບຄວາມຊຸ່ມໃນດິນໄດ້ດົນ.

- ກ້າເບ້ຍໃສ່ຖົງຢາງເພື່ອກຽມໄວ້ປູກຕົ້ນລະດູຝົນ ໂດຍສະເພາະພືດທີ່ອາຍຸຍາວ.

7.2. <u>ວິທີປະຢັດເນື້ອທີ່ດິນ.</u>

ປູກພືດຫຼາຍແນວພັນສັບປົນກັນໃນບ່ອນດຽວ ໃຫ້ເປັນຊັ້ນ ມີທັງປະເພດສູງ, ປະເພດກາງ, ປະເພດຕ່ຳ ແລະ ປະເພດເປັນເຄືອເລືອຕາມໜ້າດິນ, ປະເພດຮາກຕື້ນ, ຮາກເລິກ, ປະ

ເພດເປັນທິວສັບປົນກັບປະເພດໃບ ແລະ ປະເພດກິນໝາກ, ດອກ ( ແຕ່ບໍ່ໃຫ້ປະເພດພືດທີ່ຢູ່ໄກ້ກັນ ອອກດອກ ແລະ ໝາກ ພ້ອມກັນ.

7.3. ປະຢັດຕົ້ນທຶນ.

- ນຳໃຊ້ວັດຖຸ ແລະ ເຄື່ອງມືທີ່ມີລາຄາຕ່ຳ, ຫາໄດ້ງ່າຍຢູ່ໃນທ້ອງຖິ່ນ ເຊັ່ນ: ຝຸ່ນຄອກ, ຝຸ່ນບົ່ມ, ເຟືອງ, ຂີ້ເຖົ່າ, ຂີ້ແກບ, ແນວພັນພືດ.
- ເຮັດຮົ້ວຊີວະພາບໂດຍນຳໃຊ້ຕົ້ນໄມ້ທີ່ຫາໄດ້ໃນທ້ອງຖິ່ນ ເຊັ່ນ: ຕົ້ນກະຖິນ, ຕົ້ນຂີ້ເຫຼັກ ຕົ້ນຜັກຫວານ, ຕົ້ນແຄຂາວ, ຕົ້ນຜັກອີ່ຮູມ ແລະ ອື່ນໆ.
- ປູກພືດໝູນວຽນໃສ່ໜານ ຫຼື ເນື້ອທີ່, ປູກປະສົມປະສານກັນເພື່ອໃຫ້ພືດນຳໃຊ້ຝຸ່ນໃນໜານໄດ້.

7.4. ວິທີປະຢັດແຮງງານ ແລະ ເວລາ

ກ. ປະຢັດແຮງງານປູກ

ປູກພືດຜັກທີ່ກຸ້ມດິນສາມາດເກັບໄດ້ຫຼາຍເທື່ອເຊັ່ນ: ຜັກທິມ, ຜັກບົ້ງ, ຜັກຫວານ, ຜັກຕຳນິນ, ຜັກປັງ, ຜັກອີເລີດ, ຜັກຄາດ, ຜັກຄາວທອງ, ຜັກໜອກ, ຜັກບົ່ວເລີຍ, ທູນ, ຜັກກະຖິນ, ຜັກອີຮູມ, ຂີ້ເຫຼັກ, ໝາກແປບ, ໝາກຖົ່ວພູ, ໝາກຖົ່ວແຮ, ມັນດ້າງ, ຢານາງ, ໝໍ້ນ້ອຍ.

ຂ. ປະຢັດແຮງານໃນການທົດນ້ຳ

- ຂຸດດິນໃຫ້ເລິກ ແລະ ໃສ່ຝຸ່ນຄອກ ຫຼື ຝຸ່ນບົ່ມ
- ປູກແນວພັນທີ່ທົນທານຕໍ່ຄວາມແຫ້ງແລ້ງ
- ປູກຕົ້ນລະດູຝົນ

ຄ. ປະຢັດເວລາຊອກຫາອາຫານ

- ປູກຜັກທຸກສະນິດໄວ້ໃນສວນຄົວທີ່ຕ້ອງການປຸງແຕ່ງອາຫານປະຈຳວັນ.
- ມີເວລາທຳການຜະລິດ ແລະ ເບິ່ງແຍງສັ່ງສອນລູກຫຼານ.

8. ການບົວລະບັດຮັກສາ

ຫຼັງຈາກປູກພືດໃນສວນຄົວ ແລ້ວ ການບົວລະບັດຮັກສາກໍ່ເປັນສິ່ງທີ່ຈຳເປັນຕ້ອງປະຕິບັດ ເພື່ອໃຫ້ພືດງອກງາມ ແລະ ຈະເລີນ ເຕີບໂຕໄດ້ຮັບຜົນດີ ເຊັ່ນ: ການໃສ່ຝຸ່ນ, ການປາບສັດຕູພືດດ້ວຍຢາພື້ນເມືອງ ແລະ ການເຮັດຮົ້ວອ້ອມ.

8.1. ການໃສ່ຝຸ່ນ

ການໃສ່ຝຸ່ນສວນຄົວຄວນໃຊ້ຝຸ່ນທຳມະຊາດຊອກຫາໄດ້ງ່າຍ ໃນທ້ອງຖິ່ນ ເຊັ່ນ: ຝຸ່ນນ້ຳ, ຝຸ່ນຄອກ, ຝຸ່ນບົ່ມທີ່ມີຄົບທຸກແຮ່ທາດສຳລັບພືດ, ບໍ່ເປັນອັນຕະລາຍຕໍ່ສຸຂະພາບ ແລະ ບໍ່ທຳລາຍສິ່ງແວດລ້ອມ. ຝຸ່ນດັ່ງກ່າວນີ້ໄດ້ມາຈາກໃບໄມ້, ເສດພືດ, ເສດອາຫານ, ຂີ້ສັດ, ເຟືອງ ແລະ ເສດພືດຜັກໃນສວນຄົວ. ການໃສ່ຝຸ່ນດັ່ງກ່າວນີ້ເຮັດໃຫ້ຂີ້ກະເດືອນເກີດຂຶ້ນຫຼາຍ ຊຶ່ງເປັນ ຕົວສ້າງຮູລົມ ແລະ ສະສົມແຮ່ທາດໃນດິນໃຫ້ແກ່ພືດ.

1. ຝຸ່ນບົ່ມ.

ຝຸ່ນບົ່ມແມ່ນຝຸ່ນທຳມະຊາດ ທີ່ມີຄຸນນະພາບດີ, ມີຄົບແຮ່ທາດປະກອບດ້ວຍສິ່ງຕ່າງໆ ດັ່ງລຸ່ມນີ້:




1.1. ການເຮັດຝຸ່ນບົ່ມ

- ຕັດໄມ້ລຽນລຳອ້ອມເປັນຄອກກ້ວາງ 1 ແມັດ, ຍາວ 1 - 2 ແມັດ.
- ເອົາເສດພືດຕ່າງໆ, ໃບໄມ້ທີ່ສາມາດເນົ່າເປື່ອຍງ່າຍ, ຫ້ຍາ ຫຼື ເຟືອງລຽນເປັນຊັ້ນ ແຕ່ລະຊັ້ນແຕ່ລະຊັ້ນສູງປະມານ 30-40 ຊັງຕີແມັດ.
- ເມື່ອກອງລຽນເສດພືດຕ່າງໆ, ໃບໄມ້, ຫ້ຍາສູງປະມານ 30-40 ຊັງຕີແມັດ ໃຫ້ເອົາຂີ້ສັດໂຢໃຫ້ທົ່ວເປັນຊັ້ນໜາປະມານ 10-20 ຊັງຕີແມັດ.
- ເຮັດຄືກັນຕໍ່ໆຂຶ້ນ ໃຫ້ສູງພຽງບ່າໄຫຼ່ ຫຼື ປະມານ 1-1,5 ແມັດ ແລະ ຊັ້ນເທິງສຸດໃຊ້ດິນປົກໃຫ້ທົ່ວ.
- ຫົດນ້ຳໃຫ້ປຽກຊຸ່ມຢູ່ສະເໝີ
- ບົ່ມໄວ້ 1-2 ເດືອນກໍສາມາດນຳເອົາໄປໃສ່ພືດຜັກໄດ້.
- ຮັກສາຝຸ່ນບົ່ມໄວ້ບ່ອນຮົ່ມ, ບໍ່ໃຫ້ຕາກແດດ, ຝົນ ແຕ່ໃຫ້ຝຸ່ນມີຄວາມຊຸ່ມຢູ່ສະເໝີ.

2. ປຸຍນ້ຳ

- ປຸຍນ້ຳແມ່ນປຸຍທີ່ໄດ້ມາຈາກນ້ຳປັດສະວະ ( ນ້ຳຍ່ຽວ ) ຄົນ, ຂີ້ ແລະ ຍ່ຽວສັດ ( ຝຸ່ນຄອກ ) ປະສົມກັບນ້ຳແລ້ວນຳໄປຫົດຜັກ, ເຮັດໃຫ້ພືດຜັກຈະເລີນເຕີບໂຕໄວທັງບໍ່ມີສານພິດ ( ປຸຍເຄມີ )

2.1. <u>ຂັ້ນຕອນເຮັດປຸຍນ້ຳ</u>

ກ. <u>ວິທີ 1</u>.

- ເອົານ້ຳປັດສະວະ ( ນ້ຳຍ່ຽວ ) ໃສ່ຖັງ ຫຼື ໄຫປະໄວ້ 3-5 ມື້.
- ເອົານ້ຳປັດສະວະ ( ນ້ຳຍ່ຽວ ) ປະສົມກັບນ້ຳ 5-10 ເທົ່າ.
- ນຳໄປຫົດຜັກ, ພືດ.

➡ <u>ຕົວຢ່າງ</u>




ຂ. <u>ວິທີ 2</u>.

- ເອົາຝຸ່ນໃສ່ເປົາໃຫ້ເຕັມ, ມັດໃຫ້ແໜ້ນ
- ເອົາລົງແຊ່ໃສ່ຟຸ່ຍນ້ຳປະໄວ້ 3 ອາທິດ
- ຕັກເອົານ້ຳໃນຟຸ່ຍປະສົມກັບນ້ຳ 2-3 ເທົ່າ ແລະ ເອົາຫົດຜັກ, ພືດຕ່າງໆໄດ້.

ຕົວຢ່າງ




8.2. <u>ການປ້ອງກັນສັດຕູພືດ</u>

ການປ້ອງກັນສັດຕູພືດ ໃນສວນຄົວຊີວະພາບ ເຮົາບໍ່ຄວນໃຊ້ ສານເຄມີ ທີ່ເປັນອັນຕະລາຍຕໍ່ສຸຂະພາບ, ຕ້ອງກຳຈັດສັດຕູພືດດ້ວຍວິທີປ້ອງກັນດີຫຼາຍກ່ວາແກ້ ຊຶ່ງເປັນວິທີປະຢັດ, ບໍ່ເປັນອັນຕະລາຍເຊັ່ນ:

- ເລືອກປູກພືດທີ່ທົນທານຕໍ່ສັດຕູພືດ.
- ປູກພືດຫຼາຍແນວພັນສັບປົນກັນ.
- ນຳໃຊ້ຢາພື້ນເມືອງ.

ກ. ພືດທີ່ທົນທານຕໍ່ສັດຕູພືດ.

ພືດທົນທານຕໍ່ພະຍາດແມ່ນພືດ ພັນພື້ນເມືອງ ທີ່ເຄີຍປູກຢູ່ໃນທ້ອງຖິ່ນ ຂອງພວກເຮົາມາດົນແລ້ວ.

ຂ. ປູກພືດຫຼາຍແນວພັນສັບປົນກັນ.

ການປູກພືດຫຼາຍແນວພັນສັບປົນກັນ ແມ່ນການປູກພືດທີ່ມີກິ່ນແຂງ, ທີ່ແມງໄມ້ບໍ່ມັກມາໄກ້ສັບປົນກັບພືດທີ່ອ່ອນແອ, ພືດທີ່ປ້ອງກັນພະຍາດ ຫຼື ແມງໄມ້ໄດ້ດີມີ: ຫົວສີໄຄ, ອີ່ຕູ່, ກະເພົາ ຫອມລາບ, ຫອມບົ່ວ, ຫອມປ້ອມ, ດອກດາວເຮືອງ, ໝາກເລັ່ນ, ຫອມເຮືອດ ແລະ ອື່ນໆ.

ຄ. ການປ້ອງກັນສັດຕູພືດດ້ວຍຢາພື້ນເມືອງ.

ການປ້ອງກັນສັດຕູພືດ ດ້ວຍຢາພື້ນເມືອງ, ຜົນດີແມ່ນປະຢັດລາຍຈ່າຍ ຊຶ່ງແມ່ນການນຳໃຊ້ພືດທີ່ມີຢູ່ໃນທ້ອງຖິ່ນ ແລະ ໃນສວນຄົວຂອງພວກເຮົາມາປຸງແຕ່ງເອງຕາມສູດດັ່ງນີ້:

| ສ່ວນປະກອບ | ວິທີປຸງແຕ່ງ | ວິທີນຳໃຊ້ |
|---|---|---|
| - ໃບກະເດົາ 1 ຂີດ<br>- ຫົວຂ່າແກ່ 1 ຂີດ<br>- ໃບສີໄຄເຄື່ອງ 1 ຂີດ | - ເອົາສ່ວນປະກອບທັງ 3 ຢ່າງມາຟັກຫຼືຕຳໃຫ້ມຸ່ນ<br>- ແຊ່ໃສ່ນ້ຳ 1 ລິດ ປະໄວ້ 1 ມື້ ( 24 ຊົ່ວໂມງ )<br>- ປັ້ນເອົານ້ຳທີ່ແຊ່ໄວ້ນັ້ນໃສ່ຄຸ ຫຼື ວັດຖຸອື່ນທີ່ບັນຈຸນ້ຳ 1 ລິດ | - ນຳເອົານ້ຳສີຂຽວເຂັ້ມທີ່ປັ້ນອອກມານັ້ນ 1 ລິດ ປະສົມກັບນ້ຳ 30-40 ລິດ ແລ້ວນຳໄປຫົດ ຫຼື ສີດໃສ່ພືດ, ຜັກໃນສວນຄົວ |




➡ ຂໍ້ຄວນລະວັງ

- ຄວນຫົດ ຫຼື ສີດຢາພື້ນເມືອງໃສ່ພືດ, ຜັກ ໃນຕອນເຊົ້າ ຫຼື ແລງ
- ເກັບຮັກສານ້ຳຢາທີ່ບໍ່ທັນປະສົມນ້ຳໄວ້ໃນບ່ອນຮົ່ມ, ບ່ອນມືດ ແລະ ບໍ່ຄວນເກັບໄວ້ດົນກ່ວາ 4 ມື້.

➡ ໝາຍເຫດ

ຖ້າບໍ່ມີຫົວສີໄຄເຄື່ອງ ໃຊ້ໃບຫຍ້າຂີວ, ເຄືອເຂົາຮໍແທນໃນອັດຕາເທົ່າກັນ ຫຼື ໃຊ້ໃບກະເດົາເພີ່ມຂຶ້ນແທນກໍ່ໄດ້ ( ອັດຕາເທົ່າກັນ )

8.3. <u>ການເຮັດຮົ້ວອ້ອມສວນຄົວດ້ວຍຮົ້ວຊີວະພາບ.</u>

- ການເຮັດສວນຄົວ ເຮົາຄວນເຮັດຮົ້ວປ້ອງກັນເພື່ອບໍ່ໃຫ້ງົວ, ຄວາຍ, ໝູ, ໄກ່ ເຂົ້າທຳລາຍເຄື່ອງປູກ, ແຕ່ການເຮັດຮົ້ວສວນຄົວປະຢັດລາຍຈ່າຍ ແລະ ມີຄວາມທົນທານນັ້ນແມ່ນຮົ້ວຊີວະພາບທີ່ເຮັດດ້ວຍຕົ້ນໄມ້ທີ່ມີຊີວິດ, ນຳເອົາຕົ້ນໄມ້ມາປູກ ຫຼື ຊຳເປັນແຖວຮົ້ວ, ເຮົາປູກເປັນແຖວດຽວຕ້ອງເຮັດຮາວເສີມ, ຖ້າປູກເປັນສອງແຖວສະຫຼັບກັນບໍ່ຕ້ອງເສີມຮາວ

- ຕົ້ນໄມ້ທີ່ນຳມາເຮັດຮົ້ວຊີວະພາບ ຄວນເລືອກເອົາປະເພດ ທີ່ສາມາດນຳມາເປັນອາຫານໄດ້ ເຊັ່ນ: ຕົ້ນກະຖິນ, ແຄຂາວ, ກະເດົາ, ແຄຊ້າງ, ກົກທອງ, ຕົ້ນຜັກຫວານ, ຂີ້ເຫຼັກ, ຕົ້ນໝາກກອກ ແລະ ອື່ນໆ. ເມື່ອຕົ້ນໄມ້ໃຫ່ຍສູງພວກເຮົາຕັດຮອນລົງໃຫ້ສູງ ພຽງເອິກ ຫຼື ພຽງຫົວ ແລ້ວໃບກໍ່ຈະປົ່ງເຮົາສາມາດນຳມາເປັນອາຫານໄດ້.



ກ. <u>ການບົວລະບັດຮັກສາຮົ້ວສວນຊີວະພາບ.</u>

- ເມື່ອຕົ້ນໄມ້ທີ່ປູກເປັນແຖວຮົ້ວໃຫ່ຍ, ສູງ ແລ້ວຄວນຕັດຮອນລົງໃຫ້ສະເໝີກັນ
- ແຕ່ລະປີຄວນຕັດແຕ່ງຮົ້ວໂດຍການຕັດຮອນງ່າ ເພື່ອບໍ່ໃຫ້ຕົ້ນໄມ້( ຮົ້ວສູງ ) ເປັນພຸ່ມໃຫ່ຍບັງແສງແດດ ຈະເຮັດໃຫ້ພືດສວນຄົວບໍ່ຈະເລີນເຕີບໂຕ
- ຖ້າບອນໃດເປົ່າຫ່ວາງ ກໍ່ເອົາຕົ້ນໄມ້ມາປູກ ແຊມໃສ່ຕື່ມ ເພື່ອປ້ອງກັນ ບໍ່ໃຫ້ ສັດເຂົ້າໄປໃນສວນຄົວໄດ້.

ຂ. <u>ຄຸນປະໂຫຍດຂອງຮົ້ວຊີວະພາບ.</u>

- ປະຢັດລາຍຈ່າຍ, ມີຄວາມທົນທານ, ບໍ່ສິ້ນເປືອງແຮງງານເຮັດຮົ້ວຫຼາຍເທື່ອ.
- ມີຜັກຫຼາຍຊະນິດໃຊ້ເປັນອາຫານ
- ນຳໃຊ້ງ່າໄມ້ທີ່ເຮົາຕັດຮອນຮົ້ວອອກມາເປັນຟືນ, ບໍ່ໄດ້ໄປຊອກຟືນໃນປ່າ.

# ການປູກຜັກກາດຂຽວກວາງຕຸ້ງ ( Green Kuang Futsoi )



ຜັກກາດຂຽວກວາງຕຸ້ງ ໃຊ້ບໍລິໂພກພາກສ່ວນໃບ ແລະ ກ້ານ ຊຶ່ງເປັນທີ່ນິຍົມບໍລິໂພກຫຼາຍ. ລັກສະນະກ້ານໃບໜາມົນເກືອບກົມ ສີຂຽວ ປາຍແຜ່ນໃບມົນສີຂຽວເຂັ້ມ ມີຖິ່ນກຳເນີດໃນທະວີບອາ ຊີຕາເວັນອອກສ່ຽງໃຕ້ ປູກຫຼາຍໃນມົນທົນກວາງຕຸ້ງຂອງປະເທດຈີນ, ຮົງກົງ, ໃຕ້ຫວັນ, ໄທ ແລະ ສປປລາວ.

<u>ລັກສະນະທົ່ວໄປ</u>:

ຜັກກາດກວາງຕຸ້ງເປັນພືດຜັກທີ່ຢູ່ໃນຕະກຸນ Cruciferae ມີຊື່ວິທະຍາສາດວ່າ: *Brassica chinensis jusl. var. parachinensis ( Bailay )* Tsen Lee. ຜັກກາດກວາງຕຸ້ງເປັນພືດອາຍຸປີດຽວ ( Annual ) ສາມາດຈະເລີນເຕີບໂຕ ໄດ້ໃນດິນທຸກສະນິດທີ່ມີຄວາມອຸດົມສົມບູນດີ ປະຕິກິລິ ຍາຂອງດິນ ( PH ) 5,8-6,5 ( ດິນຂ້ອນຂ້າງເປັນກົດເລັກນ້ອຍຫາປານກາງ ) ສະພາບດິນມີຄວາມຊຸ່ມສູງພໍສົມຄວນ, ມີແສງສະຫ່ວາງ ( ແສງແດດ ) ສະໝ່ຳສະເໝີຕະຫຼອດມື້ ອຸນຫະພູມທີ່ເໝາະສົມແມ່ນຢູ່ໃນລະຫ່ວາງ 20-25$^{\circ C}$ . ສະພາບອາກາດໃນບ້ານເຮົາແມ່ນສາມາດປູກໄດ້ຕະຫຼອດປີ. ອາຍຸຕັ້ງແຕ່ຫ່ວານ ຫຼື ຢອດເມັດ ເຖິງເກັບກ່ຽວ ປະມານ 35-45 ມື້.

__ແນວພັນ:__

ຜັກກາດຊຽວກວາງຕຸ້ງ ຍັງບໍ່ມີການລະບຸຄວາມແຕກຕ່າງ ຂອງລັກສະນະພັນ. ນອກຈາກຜັກ ກາດຊຽວກວາງຕຸ້ງແລ້ວ ຍັງມີຜັກກວາງຕຸ້ງອີກ 3 ຊະນິດ ຄື: ຜັກກາດຂາວກວາງຕຸ້ງ, ຜັກກາດຮອງເຕ້ ແລະ ຜັກກາດດອກ.

__ການຕຽມດິນ:__

ຜັກກາດຊຽວ ກວາງຕຸ້ງ ເປັນຜັກ ທີ່ມີຮາກຕື້ນ ການຕຽມດິນ ຄວນໄຖ-ຂຸດ ເລິກປະມານ 15-20 ຊຕມ. ຕາກດິນໄວ້ ປະມານ 5-7 ວັນ, ໂຮຍຝຸ່ນຄອກ ຫຼື ຝຸ່ນບົ່ມທີ່ລະລາຍຕົວດີແລ້ວໃຫ້ທົ່ວ ຫຼາຍ ພວນ ແລະ ຍ່ອຍດິນໃຫ້ລະອຽດ ແລ້ວຍົກເປັນໜານ.

__ການປູກ__:

- ***ປູກແບບຫວ່ານເມັດ:*** ໃຫ້ປະສົມເມັດພັນ 1 ສ່ວນ ກັບຊາຍສະອາດ 3 ສ່ວນ ຫວ່ານໃຫ້ທົ່ວໜານ ແລ້ວປົກດ້ວຍຝຸ່ນຄອກ ຫຼື ຝຸ່ນບົ່ມ ໜາປະມານ 0,5-1 ຊຕມ. ປົກດ້ວຍເຟືອງແຫ້ງທີ່ສະອາດບາງໆ ເພື່ອເກັບຮັກສາຄວາມຊຸ່ມຊື່ນ ແລ້ວຫົດນ້ຳໃຫ້ຊຸ່ມ ເມື່ອເມັດງອກໄດ້ປະ ມານ 20 ວັນ, ແລ້ວຖອນແຍກຈັດໃຫ້ໄດ້ໄລຍະຫ່າງຂອງຕົ້ນປະມານ 20-25 ຊຕມ.
- ***ປູກແບບໂຮຍເມັດເປັນແຖວ:*** ຫຼັງຈາກປະສົມເມັດພັນດັ່ງກ່າວຂ້າງເທິງແລ້ວ ເຮັດໃຫ້ເປັນຮ່ອງ ເລິກປະມານ 0,5-1 ຊຕມ, ໂດຍໃຫ້ໄລຍະຫ່າງລະຫວ່າງແຖວ 20-25 ຊຕມ. ແລ້ວໂຮຍເມັດໃສ່ຕາມຮ່ອງທີ່ໄດ້ກຽມໄວ້ນັ້ນ. ແລ້ວປົກດ້ວຍຝຸ່ນຄອກ ຫຼື ຝຸ່ນບົ່ມບາງໆ, ປົກດ້ວຍເຟືອງແຫ້ງ ຫຼັງຈາກນັ້ນຫົດນ້ຳໃຫ້ຊຸ່ມ. ຫຼັງຈາກເມັດງອກໄດ້ປະມານ 20 ມື້ ໃຫ້ຖອນແຍກໃນແຖວ ໂດຍພະຍາຍາມຈັດໄລຍະຫ່າງຂອງຕົ້ນ ໃຫ້ໄດ້ປະມານ 20-25 ຊຕມ.

__ການບົວລະບັດຮັກສາ:__

- **ການໃຫ້ນ້ຳ:** ຄວນໃຫ້ຢ່າງພຽງພໍ ແຕ່ຢ່າໃຫ້ຈົນປຽກເກີນໄປ ໂດຍສັງເກດເບິ່ງຕາມຄວາມ ຊຸ່ມຊື່ນໃນໜານປູກໃຫ້ມີຄວາມຊຸ່ມຊື່ນຢ່າງສະໝ່ຳສະເໝີ.
- **ການໃສ່ຝຸ່ນ:** ພືດດັ່ງກາວນີ້ຕ້ອງການຝຸ່ນພໍສົມຄວນ ດັ່ງນັ້ນ ການກຳນົດຝຸ່ນເພື່ອນຳໃຊ້ແມ່ນມີຄວາມຈຳເປັນໃຫ້ຖືກຕ້ອງ ເພື່ອແນໃສ່ການລົດຕົ້ນທຶນການຜະລິດ ແລະ ໃຫ້ມີປະສິດທິຜົນທາງດ້ານຜົນຜະລິດ, ໂດຍສະເພາະດ້ານການຈະເລີນເຕີບໂຕທາງໃບ ແລະ ທາງລຳຕົ້ນ ດັ່ງນັ້ນ ຈຶ່ງແນະນຳໃຫ້ໃສ່ຝຸ່ນ N-P-K ສູດ 20-11-11 ຫຼື 16-08-08 ຫຼື ສູດທີ່ໃກ້ຄຽງກັນນີ້ ໃນຈຳນວນ 300 ກິໂລ/ເຮັກຕາ ໂດຍແບ່ງໃສ່ 2 ເທື່ອ.

1. ຄັ້ງທຳອິດ ໃສ່ເຄິ່ງໜຶ່ງເປັນຝຸ່ນຮອງພື້ນ ໂດຍປະສົມກັບດິນກ່ອນຫວ່ານເມັດ.

2. ໃສ່ເມື່ອພືດມີອາຍຸໄດ້ປະມານ 10-20 ວັນ. ຈຳນວນທີ່ເຫຼືອຄັ້ງທຳອິດ ພ້ອມນີ້ອາດຈະເພີ່ມຝຸ່ນ ຢູເຣັຍ ອີກ 60 ກິໂລ/ເຮັດຕາ ເພື່ອເລັ່ງການຈະເລີນເຕີບໂຕທາງລຳຕົ້ນ ແລະ ໃບ.

-
- **ການພວນດິນກຳຈັດຫຍ້າ**: ຄວນເຮັດໃນໄລຍະຫຼັງປູກໄດ້ປະມານ 2 ອາທິດ ເພື່ອໃຫ້ດິນລຸລ່ວງຜຸພົງ ສາມາດລະບາຍອາກາດ ແລະ ນໍ້າໄດ້ດີ, ພ້ອມທັງເປັນການກຳຈັດຫຍ້າໄປພ້ອມໆກັນ. ຫຼັງຈາກຕົ້ນພືດໃຫ່ຍມີໃບປົກຄຸມແລ້ວບໍ່ຈຳເປັນເຮັດ ເພາະວ່າຈະເຮັດໃຫ້ໃບພືດຖືກກະທົບກະເທືອນ.

<u>ການເກັບກ່ຽວ</u>:

ອາຍຸການເກັບກ່ຽວຂອງຜັກກາດກວາງຕຸ້ງ ຂ້ອນຂ້າງໄວ ປະມານ 35-45 ວັນ. ໃຫ້ເລືອກເອົາຕົ້ນທີ່ໃຫ່ຍ ໄດ້ຂະໜາດຕາມຄວາມຕ້ອງການ ການເກັບກ່ຽວແມ່ນໃຊ້ມີດຄົມໆຕັດທີ່ໂຄນຕົ້ນ, ຕັດແຕ່ງໃບນອກທີ່ແກ່ ແລະ ຖືກແມ່ງໄມ້ທຳລາຍອອກ ກ່ອນບັນຈຸສົ່ງຕະຫຼາດ ຫຼື ນຳໄປບໍລິໂພກ.

## **ການປູກຜັກສະຫຼັດ** ( Lettuce )



ຜັກສະຫຼັດ ເປັນຜັກທີ່ໃຊ້ບໍລິໂພກໃບ ມີຖິ່ນກຳເນີດຢູ່ໃນທະວີບອາຊີ ແລະ ເອີລົບ. ປູກໃນປະເທດຈີນມາແຕ່ຄູິສສັດຕະວັດ ທີ 5 , ຜັກສະຫຼັດ ມີຊື່ເອີ້ນແຕກຕ່າງກັນໄດ້ຫຼາຍຢ່າງເຊັ່ນ: ຜັກ ກາດຫອມ, ຜັກກາດຫຍໍ່ ( ພາກເໜືອ ), ມັງສາຍ ( ຄົນຈີນ ) ເປັນຕົ້ນ.

<u>**ລັກສະນະທົ່ວໄປ**</u>:

ຜັກສະຫຼັດ ເປັນຜັກທີ່ຢູ່ໃນຕະກຸນ Compositae , ມີຊື່ວິທະຍາສາດວ່າ: *Lactuca sativa Linn* , ເປັນພືດອາຍຸປີດຽວ ( Annual ) . ເຮົາສາມາດແບ່ງຜັກສະຫຼັດອອກໄດ້ເປັນ 3 ກຸ່ມໃຫ່ຍຄື:

1. ຜັກສະຫຼັດທີ່ຫໍ່ຫົວຄ້າຍຄືຜັກກະລ່ຳປີ ( Head lettuce )
2. ຜັກສະຫຼັດຊະນິດທຳມະດາບໍ່ຫໍ່ ( Leaf lettuce )
3. ຜັກສະຫຼັດທີ່ມີລຳຕົ້ນຍາວ ( Stem lettuce )

ຜັກສະຫຼັດ ສາມາດຈະເລີນເຕີບໂຕໄດ້ ໃນດິນເກືອບທຸກສະນິດ ແຕ່ແທດເໝາະທີ່ສຸດແມ່ນ ດິນຊາຍແກມຕົມ, ປະຕິກິລິຍາຂອງດິນ ( PH ) 6-6,8 , ມີຄວາມຊຸ່ມຊື່ນໃນດິນພໍສົມຄວນ ແຕ່ຕ້ອງໃຫ້ໄດ້ຮັບແສງສະຫ່ວາງ ( ແດດ ) ຕະຫຼອດມື້. ສຳລັບອຸນຫະພູມທີ່ເໝາະສົມນັ້ນ, ຖ້າເປັນພັນ ໃບ ຄວາມຕ້ອງການອຸນຫະພູມແມ່ນຢູ່ໃນລະຫ່ວາງ 21-26 $^{\circ}C$ . ຖ້າເປັນພັນຫໍ່ຫົວ ຄວາມຕ້ອງການອຸນຫະພູມແມ່ນຢູ່ໃນລະຫ່ວາງ 15,5-21 $^{\circ}C$ . ແຕ່ຜັກສະຫຼັດ ສາມາດປູກໄດ້ຕະຫຼອດປີ ຂື້ນກັບແນວພັນ. ( ສ່ວນຫຼາຍ

ແນວພັນ ຜັກສະຫຼັດ ທີ່ນິຍົມປູກໃນບ້ານເຮົາ ມີ 2 ຈຳພວກຄື: ຜັກສະຫຼັດຫໍ່ ເປັນຈຳພວກຫໍ່ຫົວ ແລະ ຜັກສະຫຼັດໃບ ເປັນຈຳພວກບໍ່ຫໍ່ຫົວ )

**ການຕຽມດິນ:**

- **ໜານກ້າເບ້ຍ:** ຂຸດ-ໄຖດິນໃຫ້ເລິກປະມານ 10-15 ຊຕມ. ຕາກດິນໄວ້ 5-7 ມື້ ໃສ່ຝຸ່ນຄອກ ຫຼືຝຸ່ນບົ່ມ ພວນດິນຊັ້ນໜ້າດິນ ໃຫ້ລະອຽດ.
- **ການຕຽມໜານປູກ:** ຂຸດ-ໄຖດິນໃຫ້ເລິກປະມານ 20-30 ຊຕມ. ຕາກດິນໄວ້ປະມານ 7-10 ວັນ. ໃສ່ຝຸ່ນຄອກ ຫຼື ຝຸ່ນບົ່ມປະສົມລົງໃນດິນພ້ອມທັງພວນໜ້າດິນໃຫ້ລະອຽດ.

**ການປູກ:**

ຜັກສະຫຼັດ ປູກໄດ້ທັງວິທີຫວ່ານຢາຍສະໝ່ຳສະເໝີໃຫ້ທົ່ວໜານ ( ພັນໃບ ). ຖ້າຫາກປູກແບບແຖວດຽວ ແລະ ແບບແຖວຄູ່ ( ໃຊ້ໄດ້ທຸກໆພັນ ). ໄລຍະຫ່າງລະຫ່ວາງຕົ້ນ ແລະ ລະຫ່ວາງແຖວທີ່ເໝາະສົມຄື: 25 x 30 ຊຕມ. ( ສຳລັບພັນໃບ ) ແລະ 40x40 ຊຕມ ( ສຳລັບພັນຫໍ່ຫົວ).

**1. ການປູກແບບຫ່ວານ:** ໃຫ້ຫ່ວານເມັດຢາຍທົ່ວທັງໜ້າດິນຂອງໜານປູກ ແລ້ວຫ່ວານປົກດ້ວຍຝຸ່ນຄອກ ຫຼື ຝຸ່ນບົ່ມທີ່ລະລາຍຕົວດີແລ້ວ ໜາປະມານ 0,5-1 ຊຕມ. ປົກຄຸມດ້ວຍເຟືອງແຫ້ງ ຫຼື ຫຍ້າແຫ້ງ, ຫົດນ້ຳດ້ວຍບົວຝອຍລະອຽດ. ເມື່ອຕົ້ນເລີ່ມງອກ ມີໃບແທ້ 2-3 ໃບ, ໃຫ້ເລີ່ມຖອນແຍກ ຕົ້ນທີ່ອ່ອນແອອອກຖິ້ມ ແລ້ວຈັດໄລຍະລະຫ່ວາງຕົ້ນ ແລະ ລະຫ່ວາງແຖວໃຫ້ໃຊ້ໄລຍະທີ່ກຳນົດໄວ້ຂ້າງເທິງນັ້ນ.

**2. ການປູກລົງໜານ:** ຫຼັງຈາກກ້າເບ້ຍໄດ້ປະມານ 25-30 ມື້ ຫຼື ເບ້ຍມີໃບແທ້ 3-4 ໃບ, ຄັດເອົາຕົ້ນທີ່ສົມບູນ ແລະ ແຂງແຮງ ຍ້າຍລົງປູກໃນໜານທີ່ໄດ້ກຽມໄວ້ແລ້ວນັ້ນ, ໂດຍໃຊ້ໄລຍະຫ່າງລະຫ່ວາງຕົ້ນ ແລະ ແຖວປະມານ 25-30 ຊຕມ.

**ການບົວລະບັດຮັກສາ:**

- **ການໃສ່ຝຸ່ນ**: ພືດດັ່ງກ່າວນີ້ຕ້ອງການຝຸ່ນພໍສົມຄວນ ດັ່ງນັ້ນ ການກຳນົດຝຸ່ນເພື່ອນຳໃຊ້ແມ່ນມີຄວາມຈຳເປັນໃຫ້ຖືກຕ້ອງ ແນໃສ່ການລົດຕົ້ນທຶນການຜະລິດ ແລະ ໃຫ້ມີປະສິດທິຜົນສູງດ້ານຜົນຜະລິດ ໂດຍສະເພາະ ດ້ານການຈະເລີນເຕີບໂຕທາງໃບ ແລະ ທາງກ້ານ ຫຼື ລຳຕົ້ນ ດັ່ງນັ້ນ ຈຶ່ງແນະນຳໃຫ້ໃຊ້ຝຸ່ນ N-P-K ສູດ 15-15-15 ( ສຳລັບພັນໃບ ), ສູດ13-13-21 ( ສຳລັບພັນຫໍ່ຫົວ ) ຫຼື ສູດທີ່ໄດ້ຄຽງກັນນີ້ ໃນຈຳນວນ 300 ກິໂລ/ເຮັກຕາ, ໂດຍແບ່ງ 2 ເທື່ອ

  1. ໃສ່ເຄິ່ງໜຶ່ງເປັນຝຸ່ນຮອງພື້ນຕອນປູກ ຫວ່ານແລ້ວປະສົມໃຫ້ເຂົ້າກັບດິນໃຫ້ລະອຽດ.

2. ໃສ່ເມື່ອພືດມີອາຍຸປະມານ 10-20 ວັນ ຂອງຈຳນວນທີ່ຍັງເຫຼືອຄັ້ງທຳອິດ ພ້ອມນີ້ອາດຈະເພີ່ມຝຸ່ນ ຢູເຣັຍອີກ 60 ກິໂລ/ເຮັກຕາ ເພື່ອເລັ່ງການຈະເລີນເຕີບໂຕທາງລຳຕົ້ນ ແລະ ໃບ.

- **ການໃຫ້ນ້ຳ** : ຄວນໃຫ້ຢ່າງພຽງພໍ ແຕ່ຢ່າໃຫ້ຈົນປຽກເກີນໄປ ໂດຍສັງເກດເບິ່ງໜານປູກຕ້ອງໃຫ້ມີຄວາມຊຸ່ມຊື່ນຢູ່ສະເໝີ.
- **ການພວນດິນກຳຈັດຫຍ້າ**: ຄວນເຮັດໃນໄລຍະທຳອິດຫຼັງຈາກປູກໄດ້ປະມານ 2 ອາທິດ ເພື່ອເຮັດໃຫ້ດິນລຸລ່ວງຟຸຟົງ ສາມາດລະບາຍນ້ຳ ແລະ ອາກາດໄດ້ດີ, ພ້ອມທັງເປັນການກຳຈັດຫຍ້າໄປພ້ອມໆກັນ. ເມື່ອຕົ້ນພືດມີໃບປົກຄຸມດິນແລ້ວບໍ່ຈຳເປັນເຮັດເລີຍ ເພາະວ່າຈະເຮັດໃຫ້ໃບພືດຖືກກະທົບກະເທືອນ.

<u>ການເກັບກ່ຽວ:</u>

ໃຊ້ມີດ ຕັດບໍລິເວນເຫງົ້າຕົ້ນ ຕັດແຕ່ງໃບຮອບນອກທີ່ບໍ່ດີອອກ ແລ້ວວາງໄວ້ໃນບ່ອນທີ່ຮົ່ມ ຫຼື ບ່ອນທີ່ມີອາກາດຖ່າຍເທ ເພື່ອລຶດການເນົ່າເສຍຫາຍ. ອາຍຸການເກັບກ່ຽວ ຜັກສະຫຼັດທີ່ປູກໃນບ້ານເຮົານັ້ນ ແມ່ນຂຶ້ນກັບແນວພັນ ແລະ ຂະໜາດຂອງການນຳໃຊ້ເພື່ອບໍລິໂພກ, ໂດຍສະເລ່ຍອາຍຸການເກັບກ່ຽວແມ່ນ 50-70 ວັນ.



## ການປູກຜັກບົ້ງ ( Kang kong )

ຜັກບົ້ງເປັນຜັກໃນຕະກຸນ Convolvulaceae ມີຊື່ວິທະຍາສາດວ່າ: *Ipomoea aquatica Forssk.* ເປັນພືດພື້ນເມືອງຂອງທະວີບອາຊີເຂດຮ້ອນ, ອາຟຣິກາ, ອອດສະເຕເລຍ ແລ້ວແຜ່ກະຈາຍໄປຍັງປະເທດເຂດຮ້ອນຕ່າງໆ ທົ່ວໂລກ. ຜັກບົ້ງເປັນຜັກປູກເພື່ອບໍລິໂພກພາກສ່ວນລຳຕົ້ນ ແລະ ໃບ, ປູກໄດ້ງ່າຍ ແລະ ສາມາດຈະເລີນເຕີບໂຕໄດ້ໄວ.

**<u>ລັກສະນະທົ່ວໄປ:</u>**

ຜັກບົ້ງເປັນຜັກທີ່ມີອາຍຸຫຼາຍປີ ( Perenial ) ໄລຍະເວລາຕັ້ງແຕ່ຫວ່ານ ຫຼື ຢອດເມັດຈົນເຖິງເກັບກ່ຽວປະມານ 25-30 ວັນ. ສາມາດປູກໄດ້ຕະຫຼອດປີ ອຸນຫະພູມທີ່ເໝາະສົມແມ່ນຂ້ອນຂ້າງອົບອຸ່ນ ຫຼື ຮ້ອນ ສາມາດເກີດຂື້ນໄດ້ກັບດິນເກືອບທຸກສະນິດ ປະຕິກິລິຍາຂອງດິນ ( PH ) ເປັນກົດເລັກນ້ອຍຫາປານກາງ. ຜັກບົ້ງມັກຄວາມຊຸ່ມຊື່ນໃນດິນສູງ, ມັກແສງ.

**<u>ການຕຽມດິນ:</u>**

ຜັກບົ້ງເປັນຜັກທີ່ມີລະບົບຮາກຕື້ນ ຄວນຂຸດ-ໄຖດິນເລິກປະມານ 15-20 ຊຕມ. ຕາກດິນໄວ້ປະມານ 7-10 ວັນ ໃສ່ຝຸ່ນຄອກ ຫຼື ຝຸ່ນບົ່ມໃຫ້ຫຼາຍປະສົມເຂົ້າກັນກັບດິນ, ພວນ ແລະ ຍ່ອຍດິນໃຫ້ລະອຽດ ເພື່ອຄວາມສະດວກໃນການຫວ່ານເມັດ.

**<u>ການປູກ:</u>**

ຜັກບົ້ງນິຍົມຫວ່ານກະຈາຍທົ່ວໜານ ຫຼື ບາງເທື່ອອາດໂຮຍເມັດເປັນແຖວ. ປູກໂຮຍເມັດເປັນແຖວ ເໝາະສົມສຳລັບປູກໃນໜານນ້ອຍ ( ປູກຜັກສວນຄົວ )

ຈຳນວນເມັດທີ່ໃຊ້ຫວ່ານ ປະມານ 70 ກິໂລ/ເຮັກຕາ. ກ່ອນຫວ່ານຄວນ ແຊ່ເມັດໄວ້ໃນນ້ຳປະມານ 12 ຊົ່ວໂມງ ເພື່ອໃຫ້ເມັດງອກໄວ. ຄວນຫວ່ານໃຫ້ທົ່ວ ແລະ ສະໝ່ຳສະເໝີ ໃຫ້ເມັດຫ່າງກັນເລັກນ້ອຍ ແລ້ວປົກດ້ວຍດິນປະສົມລະອຽດ ຫຼື ຝຸ່ນຄອກ-ຝຸ່ນບົ່ມ ທີ່ສະຫຼາຍຕົວດີແລ້ວໜາປະມານ 1 ຊຕມ. ຫຼື ໂຮຍເມັດເປັນແຖວຫ່າງກັນ 10-15 ຊຕມ.

ຫຼັງຈາກປູກແລ້ວ ຫົດດ້ວຍບົວທີ່ເປັນຝອຍລະອຽດໃຫ້ຊຸ່ມ, ປົກດ້ວຍເຟືອງແຫ້ງບາງໆ ເພື່ອຊ່ວຍຮັກສາຄວາມຊຸ່ມຊື່ນໃນດິນ. ເບ້ຍຈະເລີ່ມງອກຫຼັງຈາກຫວ່ານເມັດໄດ້ 2-3 ວັນ.

**<u>ການບົວລະບັດຮັກສາ:</u>**

- **ການໃສ່ຝຸ່ນ:** ເນື່ອງຈາກຜັກບົ້ງເປັນຜັກກິນໃບ ແລະ ມີຄວາມຕ້ອງການຝຸ່ນຫຼາຍພໍສົມຄວນ. ດັ່ງນັ້ນ, ການກຳນົດຝຸ່ນເພື່ອນຳໃຊ້ແມ່ນມີຄວາມຈຳເປັນໃຫ້ຖືກຕ້ອງ ແນໃສ່ການລຸດຕົ້ນທຶນການຜະລິດ ແລະ ໃຫ້ມີປະສິດທິຜົນສູງດ້ານຜົນຜະລິດ ໂດຍສະ

ເພາະດ້ານການຈະເລີນເຕີບໂຕທາງໃບ ຫຼື ລຳຕົ້ນ. ດັ່ງນັ້ນ, ຈຶ່ງແນະນຳໃຫ້ໃຊ້ ຝຸ່ນ N-P-K ສູດ 46-00-00 ຫຼື ສູດທີ່ໃກ້ຄຽງກັນນີ້ ໃນຈຳນວນ 300 ກິໂລ/ເຮັກຕາ. ໃສ່ເປັນຝຸ່ນເລັ່ງ ຄັ້ງທີ່ 1 ເມື່ອພືດມີອາຍຸປະມານ 10-20 ວັນ ຈຳນວນເຄິ່ງນຶ່ງ. ເທື່ອທ 2 ໃສ່ເມື່ອ ອາຍຸໄດ້ 22-27 ວັນ, ຈາກສ່ວນທີ່ເຫຼືອ ທີ່ໄດ້ກຳນົດໄວ້ໃນເບື້ອງຕົ້ນນັ້ນ.

- **ການໃຫ້ນ້ຳ:** ຄວນໃຫ້ຢ່າງພຽງພໍ ແລະ ເປັນປະຈຳ ເພື່ອໃຫ້ມີຄວາມຊຸ່ມຊື່ນໃນໜານປູກ.
- **ການພວນດິນກຳຈັດຫຍ້າ:** ຄວນເຮັດໃນໄລຍະທຳອິດ ເພື່ອເຮັດໃຫ້ດິນລຸລ່ວງຜຸຜົງ ສາມາດລະບາຍອາກາດ ແລະ ນ້ຳໄດ້ດີ ພ້ອມກັບການກຳຈັດຫຍ້າໄປພ້ອມໆກັນ. ຫຼັງຈາກພືດໃຫ່ຍ ມີໃບປົກຄຸມແລ້ວບໍ່ຈຳເປັນເສຍຫຍ້າເລີຍ.

**<u>ການເກັບກ່ຽວ</u>:**

ອາຍຸການເກັບກ່ຽວຂອງຜັກບົ້ງ ປະມານ 25-30 ວັນ ຫຼັງຈາກຫ່ວານເມັດລົງດິນ. ການເກັບ ກ່ຽວໃຊ້ມີຫຼືກ, ລ້າງດິນທີ່ຕິດຮາກອອກໃຫ້ໝົດ ແລະ ບັນຈຸໃສ່ພາສະນະສິ່ງໃຫ້ຕະຫຼາດ.

# ການປູກຜັກຕັ່ງສ່າຍ ( Celery )

ຜັກຕັ່ງສ່າຍ ເປັນພືດຜັກທີ່ໃຊ້ບໍລິໂພກພາກສ່ວນໃບ ແລະ ກ້ານ, ບໍລິໂພກເປັນຜັກສົດ ຫຼື ໃຊ້ປະກອບເຂົ້າໃນການປຸງແຕ່ງອາຫານສະນິດຕ່າງໆ ມີກິ່ນຫອມ ຜ່ອຍ ແລະ ຫວານ.

ຜັກຕັ່ງສ່າຍມີຖິ່ນກຳເນີດໃນທະວີບເອີລົບ, ອາຊີ ແລະ ອາຟຣິກາເໜືອ.

**<u>ລັກສະນະທົ່ວໄປ:</u>**

ຕັ່ງສ່າຍເປັນພືດທີ່ຢູ່ໃນຕະກຸນ Umbelliferae ມີຊື່ວິທະຍາສາດວ່າ *Apium Graveolens Linn.Var . dulce ( Mill ) Pers.* ເປັນພືດຜັກລົ້ມລຸກ ໃບ, ກ້ານໃບ, ລຳຕົ້ນ, ຮາກ ແລະ ເມັດ ມີກິ່ນຫອມ.

**<u>ແນວພັນ:</u>**

ຕັ່ງສ່າຍທີ່ໃຊ້ປູກມີ 2 ຊະນິດຄື:

1. ຕັ່ງສ່າຍພັນຈີນ: ມີກ້ານໃບຂະໜາດນ້ອຍ, ກ້ານໃບ 1 ກ້ານ ປະກອບດ້ວຍໃບຍ່ອຍ 3-7 ໃບ ມີລຳຕົ້ນສັ້ນ.
2. ຕັ່ງສ່າຍພັນ ຢູໂຣບ: ມີກ້ານໃບຕຸ້ຍ, ໜາ, ຍາວປະມານ 25-30 ຊຕມ. ຮູບຮ່າງ ແລະ ຂະໜາດ ແມ່ນ ເທົ່າໆ ກັບພັນຈີນ.

**<u>ການຕຽມດິນ:</u>**

- **ການຕຽມໜານກ້າ:** ຂຸດ-ໄຖພວນດິນ ຕາກແດດໄວ້ ປະມານ 5-7 ວັນ. ຄາດ ຫຼື ປັ່ນ ໜ້າດິນໃຫ້ລະອຽດ ໃສ່ຝຸ່ນຄອກ ຫຼື ຝຸ່ນບົ່ມທີ່ສະຫຼາຍຕົວແລ້ວ ປົນເຂົ້າກັບດິນໃຫ້ທົ່ວ ໜານ, ໜານກ້າຄວນມີຂະໜາດກ້ວາງ 1 ແມັດ, ຍາວແມ່ນຕາມຄວາມພໍໃຈຂອງຜູ້ປູກ.
- **ການຕຽມໜານປູກ:** ຂຸດດິນໃຫ້ເລິກປະມານ 15-20 ຊຕມ. ຕາກດິນໄວ້ 7-10 ມື້ ,ໃສ່ຝຸ່ນຄອກ ຫຼື ຝຸ່ນບົ່ມ ປົນເຂົ້າກັບດິນເພື່ອປັບປຸງສະພາບຂອງດິນໃຫ້ດີຂຶ້ນ ຄາດ ພວນດິນໃຫ້ລະອຽດ.

**<u>ການປູກ:</u>**

- **ການກ້າເບ້ຍ:** ນຳເອົາເມັດຕັ່ງສ່າຍປະສົມກັບຊາຍ ໃນອັດຕາສ່ວນ 1 ຕໍ່ 10ແລ້ວ ຫວ່ານລົງໜານກ້າ ເອົາເຟືອງແຫ້ງປົກບາງໆ ຫົດນ້ຳໃຫ້ທົ່ວສະໝ່ຳສະເໝີ ຕ້ອງໃຊ້ ເວລາກ້າເຖິງ ປະມານ 35-40 ມື້ ເບ້ຍຈຶ່ງໃຫ່ຍພໍຈະຍ້າຍປູກໄດ້
- **ການປູກ:** ຫຼັງຈາກກ້າເບ້ຍໄດ້ປະມານ 40 ວັນແລ້ວ ເບ້ຍໃຫ່ຍພໍປູກໄດ້ແລ້ວ ໃຫ້ ຍ້າຍເບ້ຍທີ່ສົມບູນມາ ປູກຢູ່ໜານທີ່ຕຽມໄວ້ ໂດຍໃຊ້ໄລຍະຫ່າງລະຫ່ວາງຕົ້ນ 25

ຊຕມ. ລະຫ່ວາງແຖວ 30 ຊຕມ. ແລ້ວຫົດນ້ຳໃຫ້ຊຸ່ມ ປົກດ້ວຍເຟືອງແຫ້ງບາງໆ ເພື່ອຮັກສາຄວາມຊຸ່ມຂອງໜານ.

<u>ການບົວລະບັດຮັກສາ</u> :

ຄວນມີການຫົດນ້ຳໃຫ້ສະໝ່ຳສະເໝີ ໃຫ້ພຽງພໍ ແຕ່ຢ່າໃຫ້ປຽກເກີນໄປ ເພາະເບ້ຍອາດຈະເນົ່າເສຍຫາຍໄດ້. ນອກຈາກນີ້ ຖ້າມີຫຍ້າເລັກນ້ອຍ ຄວນກຳຈັດ ໂດຍໃຊ້ມືຖອນເພື່ອປ້ອງກັນການຍາດອາຫານ ແລະ ນ້ຳ ຈາກພືດທີ່ເຮົາປູກ.

- **ການໃສ່ຝຸ່ນ**: ເນື່ອງຈາກຕົ່ງສ່ຳຍເປັນຜັກກິນໃບ ຕ້ອງການຝຸ່ນຫຼາຍພໍສົມຄວນ. ການກຳນົດຝຸ່ນ ເພື່ອນຳໃຊ້ແມ່ນມີຄວາມຈຳເປັນໃຫ້ຖືກຕ້ອງ ແນໃສ່ການລົດຕົ້ນທຶນການຜະ ລິດ ແລະ ໃຫ້ມີປະສິດທິຜົນສູງດ້ານຜົນຜະລິດ ໂດຍສະເພາະ ດ້ານການຈະເລີນເຕີບໂຕທາງໃບ ຫຼື ລຳຕົ້ນ. ດັ່ງນັ້ນ, ຈຶ່ງແນະນຳໃຫ້ໃຊ້ ຝຸ່ນ N-P-K ສູດ 46-00-00 ຫຼື ສູດທີ່ໃກ້ຄຽງກັນນີ້ ໃນຈຳນວນ 300 ກິໂລ/ເຮັກຕາ. ໃສ່ເປັນຝຸ່ນເລັ່ງຄັ້ງທີ 1 ເມື່ອພືດມີອາຍຸປະມາ 10-20 ວັນ, ຈຳນວນເຄິ່ງນຶ່ງ. ໃສ່ເທື່ອທີ 2 ໃສ່ເມື່ອອາຍຸໄດ້ 25-30 ວັນ ຈາກສ່ວນທີ່ເຫຼືອ ທີ່ໄດ້ກຳນົດໄວ້ໃນເບື້ອງຕົ້ນນັ້ນ.
- **ການໃຫ້ນ້ຳ**: ຄວນໃຫ້ຢ່າງພຽງພໍ ແລະ ເປັນປະຈຳໃຫ້ມີຄວາມຊຸ່ມຊື່ນໃນໜານປູກ.
- **ການພວນດິນກຳຈັດຫຍ້າ**: ຄວນເຮັດໃນໄລຍະທຳອິດ ເພື່ອເຮັດໃຫ້ດິນລຸລ່ວງຜຸຜົງເຮັດໃຫ້ລະ ບາຍອາກາດ ແລະ ນ້ຳໄດ້ດີ ພ້ອມກັບການກຳຈັດຫຍ້າໄປພ້ອມໆ ກັນ. ເມື່ອຕົ້ນພືດມີໃບປົກຄຸມດິນແລ້ວບໍ່ຈຳເປັນເຮັດເລີຍ.

<u>ການເກັບກ່ຽວ:</u>

ຫຼັງຈາກປູກຕົ່ງສ່ຳຍໄດ້ 90 ວັນ ຫຼັງຈາກຍ້າຍເບ້ຍມາປູກ ກໍສາມາດເກັບກ່ຽວໄດ້ໂດຍໃຊ້ມືຫຼົກ, ກ່ອນຈະຫຼົກຄວນຫົດນ້ຳໃຫ້ດິນຊຸ່ມເສຍກ່ອນ.

# ເຕັກນິກການປູກຜັກກາດນາ

I. ຄຸນລັກສະນະທົ່ວໄປ

ຜັກກາດນາເປັນຜັກທີ່ຄົນຮູ້ຈັກກັນດີ ເປັນຜັກທີ່ຢູ່ໃນຕະກຸນ Cruciferae ມີຊື່ວິທະຍາສາດ *Brassica albogjabr* ເປັນຜັກທີ່ນິຍົມກັນປູກໃນທົ່ວທຸກເຂດຂອງປະເທດລາວເປັນຜັກທີ່ປູກເພື່ອ ກິນຕົ້ນ ແລະ ໃບ, ອາຍຸໃນການເກັບກ່ຽວ ນັບແຕ່ມື້ຍອດເມັດຫາເກັບກ່ຽວ 45 - 55 ວັນເປັນຜັກທີ່ສາ ມາດປູກໄດ້ຕະຫຼອດປີແຕ່ໄດ້ຮັບຜົນດີທີ່ສຸດແມ່ນ ໃນເດືອນ ຕຸລາ ຫາ ມີນາ

II. ແນວພັນທີ່ນິຍົມປູກ

ພັນທີ່ນິຍົມກັນປູກຜັກກາດນາເປັນສິນຄ້າໃນປະເທດລາວແມ່ນພັນທີ່ມີດອກສີຂາວທັງໝົດໂດຍສັ່ງເມັດຈາກຕ່າງປະເທດເຂົ້າມາປູກ ແລະ ປັບປຸງພັນປະຈຸບັນນິຍົມກັນປູກມີຢູ່ 3 ແນວພັນ

1. ພັນໃບມົນ

ມີລັກສະນະໃບກ້ວາງໃຫ່ຍສັ້ນປາຍມົນໜ້າໃບບໍ່ຮາບພຽງ ໄດ້ແກ່ພັນຮູ້ຝາງເບີ 1

2.ພັນໃບແຫຼມ

ເປັນພັນທີ່ມີລັກສະນະໃບແຄບກ່ອນພັນໃບມົນປາຍແຫຼມຂໍ້ຫ່າງແຜ່ນໃບຮາບພຽງດີໄດ້ແກ່ພັນ P.L 20 ເປັນຕົ້ນ

3. ພັນຍອດຫຼືກ້ານ

ມີລັກສະນະໃບຄ້າຍຄືກັນກັບສະນິດໃບແຫຼມແຕ່ຈຳນວນໃບຂໍ້ຕົ້ນມີຈຳນວນໜ້ອຍກົ່ວປັອງຍາວກອ່ນໄດ້ແກ່ພັນ ແມ່ໂຈ້ 1 ເປັນຕົ້ນສາມາດໃຫ້ຜົນຜະລິດປະມານ 1500 - 2000 ກລ/ໄລ່

III. ສະພາບດິນຟ້າອາກາດທີ່ເໝາະສົມ

ເປັນພືດທີ່ສາມາດປູກໃນດິນເກືອບທຸກສະນິດ ດິນທີ່ມີຄວາມອຸດົມສົມບູນສູງ ມີລະດັບ pH ຢູ່ໃນລະຫວ່າງ 5.5 - 6.8 ມີຄວາມຊຸ່ມສະໝ່ຳສະເໝີ ຕ້ອງການແສງແດດຫຼາຍ ສາມາດຈະສາມາດຂະ ຫຍາຍ ໂຕໄດ້ດີ ໃນອຸນນະພູມສະເລ່ຍ 20°c

IV. ການຕຽມດິນປູກ

ໄຖ ຫຼື ຂຸດດິນໃຫ້ເລິກປະມານ 15 - 20 ຊມ ຕາກແດດໄວ້ປະມານ 7 - 10 ວັນ ນຳຝຸ່ນຄອກ ແລະ ຝຸນບົ່ມມາໃສ່ເພື່ອຊ່ວຍເພີ່ມຄວາມອຸດົມສົມບູນຂອງດິນ

V. ການກ້າແກ່ນ

ໜານກ້າຄວນມີລວງກວ້າງ 1 ມ ສ່ວນລວງຍາວສຸດແລ້ວແຕ່ຄວາມເໝາະສົມ ຄວນຂຸດດິນ ຕາກແດດ ໄວ້ຢ່າງໜ້ອຍ 5 - 7 ວັນ ແລ້ວປະສົມຝຸນຄອກຫຼືຝຸ່ນບົ່ມລົງໃນໜານກ້າ ຈາກນັ້ນຈຶ່ງຫວ່ານ ເມັດໃຫ້ສະໝ່ຳສະເໝີ ແລ້ວປົກດ້ວຍດິນປະສົມຝຸ່ນຄອກໜາປະມານ 0.6 - 1 ມມ

ໃຊ້ເຟືອງ ຫຼື ຫຍ້າ ແຫ້ງປົກ ບາງໆຫົດນ້ຳ ດ້ວຍບົວໃຫ້ລະອຽດເມັດຈະງອກພາຍໃນ 7 ວັນ ການບຳລຸງຮັກສາເບ້ຍ ຄວນໃສ່ສານລະລາຍສະຕາຕໍໂລລູຊັນ ຫົດເພື່ອໃຫ້ເບ້ຍແຂງແຮງ ເມື່ອອາຍຸໄດ້ປະມານ 25 - 30 ວັນກໍ່ສາມາດຍ້າຍເບ້ຍລົງໄປປູກໄດ້

VI. <u>ການປູກ</u>

ຜັກກາດນາສາມາດປູກໄດ້ 2 ວິທີ

1. ການນຳເບ້ຍມາປູກ ໄລຍະຫ່າງທີ່ເໝາະສົມໃນການປູກຂະໜາດ 20 x 20 ຊມ ຄວາມ ກວ້າງຂອງໜານປູກ ແມ່ນ 1ມ - 1.2 ມ , ຄວາມຍາວສຸດແລ້ວແຕ່ຄວາມເໝາະສົມ, ການປູກຄວນປູກໃນເວລາທີ່ມີອາກາດເຢັນ ເຊັ່ນຕອນແລງ, ກ່ອນຈະຍ້າຍເບ້ຍມາປູກຄວນຫົດນ້ຳໃຫ້ຊຸ່ມເສຍກ່ອນຈາກນັ້ນຈຶ່ງຍ້າຍເບ້ຍມາປູກພາຍຫຼັງປູກແລ້ວຕອ້ງນຳແຜ່ນຢາງມາປົກເພື່ອຮັກສາຄວາມຊຸ່ມ ແລະ ປ້ອງກັນບໍ່ໃຫ້ຖືກແສງແດດໂດຍກົງ ເພື່ອປ້ອງກັນການຮ່ຽວແຫ້ງຂອງຜັກໃຊ້ແຜ່ນຢາງປົກປະມານ 3 - 5 ວັນ
2. ວິທີນຳເມັດມາປູກໂດຍກົງ ພາຍຫຼັງກຽມດິນແລ້ວ ນຳເມັດມາຫວ່ານລົງໃນໜານທີ່ກຽມໄວ້ໃຫ້ເມັດຫ່າງກັນປະມານ 2 - 3 ຊມ ໃຊ້ດິນປະສົມຝຸ່ນຄອກຫວ່ານໜາປະມານ 0.6 - 1 ຊມ ເພື່ອເກັບຮັກສາຄວາມຊຸ່ມໃຫ້ເມັດ, ຈາກນັ້ນໄຊ້ເຟືອງ ຫຼື ຫຍ້າແຫ້ງປົກເພື່ອປ້ອງກັນບໍ່ໃຫ້ເມັດໄຫຼໂຮມກັນຈາກນັ້ນ ເມັດຈະງອກພາຍໃນ 7 ວັນ, ຫັງຈາກເບ້ຍມີອາຍຸປະມານ 20 ວັນຈຶ່ງທຳການຖອນແຍກອອກໂດຍເລືອກເອົາຕົ້ນທີ່ສົມບູນໄວ້ ແລະ ມີໄລຍະຫາງປະມານ 10 ຊມ ເມື່ອອາຍຸໄດ້ 30 ວັນຈຶ່ງທຳການຖອນແຍກຄັ້ງທີ 2 ໂດຍເຫຼືອໄລຍະຫ່າງປະມານ 20 ຊມ ການຖອນແຍກທຸກຄັ້ງຕອ້ງກຳຈັດວັດສະພືດໄປພ້ອມກັນ.

VII. <u>ການບົວລະບັດຮັກສາ</u>

1 ການໃຫ້ນ້ຳ ຜັກກາດນາເປັນພືດທີ່ຕອ້ງນ້ຳຢ່າງພຽງພໍ ແລະ ສະໝ່ຳສະເໝີຕະຫຼອດລະດູການ ຖ້ານ້ຳບໍ່ພຽງພໍກັບຄວາມຕ້ອງການ ຈະເຮັດໃຫ້ການຂະຫຍາຍໂຕ ຂອງຜັກຊັກຊ້າ ແລະ ຄຸນນະພາບຕ່ຳການຫົດນ້ຳຄວນໄຊ້ແບບຝອຍ ແລະ ຫົດທຸກໆ ເຊົ້າ ແລະ ແລງ.

3. ການໃສ່ຝຸ່ນ ຜັກກາດນາເປັນພືດທີ່ຕ້ອງການທາດໄນໂຕຼເຈນສູງ ອັດຕາສ່ວນໃນການໄຊ້ຝຸ່ນແມ່ນ 2 : 1 : 1 ເຊັ່ນ: ຝຸ່ນເຄມີສູດ 12 - 8 - 8 ຫຼື 20 - 11 - 11 ໃນອັດຕາ 100 ກລ/ ໄລ່ ຂື້ນກັບຄວາມອຸດົມສົມບູນຂອງດິນ ແລະ ປະລິມານຝຸ່ນຄອກທີ່ໃຊ້ລົງໄປໃນດິນ ການໃສ່ຝຸ່ນຄອກຄວນໃສ່ 2 ຄັ້ງ ຄືຄັ້ງທຳອິດພາຍຫຼັງຖອນແຍກຄັ້ງທີ 1 ແລະ ຄັ້ງທີ 2 ພາຍຫຼັງຖອນແຍກຄັ້ງທີ 2 ຖ້າສັງເກດເຫັນວ່າຜັກຂາດຝຸ່ນຄວນຈະເພີ່ມການໃຫ້ຝຸ່ນທາງໃບໂດຍໃຊ້ຝຸ່ນຢູເລຍປະມານ 3-4 ກະລາມ/ນ້ຳ2ລິດສີດພົ່ນທາງໃບ.

VIII. ການເກັບກ່ຽວ

ຜັກກາດນາທີ່ປູກໃນປະເທດລາວມີອາຍຸເກັບກ່ຽວປະມານ 45 - 55 ວັນ ຫຼັງຈາກປູກ ເຊິ່ງເປັນໄລຍະທີ່ຈະເລີນເຕີບໂຕເຕັມທີ່ອາຍຸປະມານ 45 ວັນ, ອາຍຸ 50 - 55 ວັນເປັນອາຍຸທີ່ໃຫ້ນ້ຳໜັກສູງສຸດ.

IX. ພະຍາດ ແລະ ແມງໄມ້

1. ພະຍາດເນົ່າຄໍດິນ ສາຍເຫດເກີດຈາກເຊື້ອລາເປັນພະຍາດທີ່ສາມາດເກີດຂຶ້ນຢູ່ໃນໜານກ້າເບ້ຍເທົ່ານັ້ນສາຍເຫດເກີດຈາກຄວາມໜາແໜ້ນຂອງເບ້ຍເມື່ອຖືກແສງແດດເບ້ຍຈະພັບລົງແລ້ວແຫ້ງຕາຍ.

   ການປ້ອງກັນ ແລະ ກຳຈັດ ບໍ່ຄວນຫວ່ານເມັດໃຫ້ມີຄວາມໜາແໜ້ນຫຼາຍເກີນໄປໃຊ້ຢາປ້ອງກັນ ແລະ ກຳຈັດເຊື້ອລາປະສົມນ້ຳໃນອັດຕາສ່ວນຄວາມເຂັ້ມຂຸ້ນໜ້ອຍ, ຫົດລົງໃນໜານກ້າເບ້ຍປະມານ 1 - 2 ເທື່ອ ໂດຍທົ່ວໄປແລ້ວ ມັກໃຊ້ຢາໄຊແນບ ຫຼື ມາຍແນບ.

2. ພະຍາດລານນ້ຳຄ້າງ ສາຍເຫດເກີດຈາກເຊື້ອລາໃບເປັນຈຸດສີດຳລວມກັນເປັນກຸ່ມທາງກ້ອງໃບຈະມີແປ້ງສີຂາວ ພະຍາດນີ້ສາມາດເກີດຂຶ້ນໄດ້ກັບທຸກໆ ໄລຍະຂອງການຈະເລີນເຕີບໂຕຂອງຜັກ ພະຍາດນີ້ບໍ່ສາມາດເຮັດໃຫ້ຜັກຕາຍ ແຕ່ເຮັດໃຫ້ການຈະເລີນເຕີບໂຕຊ້າ ນ້ຳໜັກຫຼຸດລົງເພາະໄດ້ລີໃບທີ່ເສຍຫາຍອອກ

   ການປອ້ງກັນ ແລະ ກຳຈັດ ສີດພົ່ນດ້ວຍຢາປ້ອງກັນ ແລະ ກຳຈັດເຊື້ອລາຈຳພວກ ໄຊແນບ ແລະ ມາຍແນບ ໄດໂຟລາແທນ ຫຼື ສານເຄມີສະນິດອື່ນໆ ທີ່ມີສານທອງແດງ ແຕ່ສານເຄມີທີ່ປະກອບສານທອງແດງບໍ່ຄວນໃຊ້ໃນໄລຍະທີ່ເປັນເບ້ຍ.

3. ບົ້ງກັດໃບ ສາຍເຫດເກີດຈາກແມງກະເບື້ອກາງຄືນ ປີກຄູ່ໜ້າມີຈຸດສີນ້ຳຕານມີລວດລາຍເຕັມປີກ ສ່ວນປີກຄູ່ຫຼັງມີສີຂາວເມື່ອວາງໄຂ່ໂຕແມ່ໂຕໜຶ່ງສາມາດວາງໄຂ່ໄດ້ປະມານ 200 - 300 ໜ່ວຍ, ໄຂ່ຈະຟັກເປັນໂຕພາຍໃນ 3 - 7 ວັນການປ້ອງກັນ ແລະ ກຳຈັດເມື່ອພົບບົ້ງຄວນສີດພົ່ນ ດ້ວຍສານເຄມີເຊັ່ນ: ເມໂລມິນ ໃນອັດຕາ 10 - 20 ກະລາມ/ນ້ຳ20ລິດ ຫຼື ໃຊ້ ເມວິນຟອດ 20 - 30 ຊີຊີ/ນ້ຳ20ລິດ.

# ການປູກຜັກບົ່ວແບ່ງ



## ລັກສະນະທົ່ວໄປ:

ຜັກບົ່ວແບ່ງ ເປັນຜັກທີ່ເຮົາໃຊ້ ບໍລິໂພກພາກສ່ວນຕົ້ນ ແລະ ໃບ ມີລັກສະນະເກີດຫົວ ແລະ ແຕກກໍ ຄ້າຍຄືກັບຜັກບົ່ວແດງ ແຕ່ຫົວບໍ່ຂະຫຍາຍໃຫ່ຍ ເປັນຫົວໃໝ່ຂື້ນມາ ຊຶ່ງຂ້ອນຂ້າງນ້ອຍ ແລະ ລີບ ມີສີຂາວໆໜ້າຮັບປະທານ. ຜັກບົ່ວແບ່ງເປັນຜັກມີອາຍຸ 2 ປີ, ແຕ່ປູກເປັນຜັກອາຍຸປີດຽວ(Annual) ມີຖິ່ນກໍາເນີດແທບຊີ ອາຍຸຕັ້ງແຕ່ປູກເຖິງເກັບກ່ຽວປະມານ 40-50 ວັນ ສາມາດຈະເລີນເຕີບໄດ້ໃນດິນເກືອບທຸກສະນິດ. ແຕ່ດິນທີ່ເໝາະສົມທີ່ສຸດແມ່ນດິນຊາຍແກມຕົມ ປະຕິກິລິຍາຂອງດິນ ($p^H$) 5,8-6,5 ມີຄວາມຊຸ່ມຊື່ນໃນດິນສະໝ່ຳສະເໝີ ມັກອາກາດຊຸ່ມຊື່ນ ຕ້ອງມີແສງແດດຕະຫຼອດວັນມັກອາກາດເຢັນ ອຸນຫະພູມທີ່ເໝາະສົມປະມານ 13-24 $^{\cdot c \cdot}$

## ແນວພັນ:

ພັນທີ່ປູກໃນປະຈຸບັນນີ້ແມ່ນພັນພື້ນເມືອງ ແລະ ພັນປັບປຸງໄຕ້ຫວັນ ຊຶ່ງໃຫ້ຜົນຜະລິດສູງ ແຕກດີການເກັບພັນໄວ້ໃຊ້ເອງ ແມ່ນສາມາດເກັບໄດ້ແຕ່ບໍ່ນິຍົມ ແພາະວ່າຈະເຮັດໃຫ້ຜົນຜະລິດຕ່ຳກ່ວາເກົ່າ.

## ການຕຽມດິນ:

ເນື່ອງຈາກ ຜັກບົ່ວແບ່ງ ເປັນຜັກທີ່ມີລະບົບຮາກຕື້ນ ເຊັ່ນດຽວກັບ ຜັກຊະນິດອື່ນໆ ການຂຸດ-ໄຖດິນ ເລິກປະມານ 15 - 20 ຊຕມ ຕາກດິນໄວ້ 5 - 7 ວັນ ໃສ່ຝຸ່ນຄອກ ຫຼື ຝຸ່ນບົ່ມໃຫ້ຫຼາຍພວນ ແລະ ຍ່ອຍດິນເລັກໜ້ອຍ.

## ການຂະຫຍາຍພັນ:

ໃຊ້ຫົວແຍກອອກ ໂດຍຕັດໃບແທ້ ຫຼື ຮາກເກົ່າຖິ້ມ ແກະຫົວອອກ ເປັນ ກີບ ດຽວຢ່າໃຫ້ເປືອກລອກເປັນບາດ ເພາະເປັນທາງເຂົ້າໃຫ້ແກ່ເຊື້ອພະຍາດໄດ້. ແລ້ວເກັບໄວ້ບ່ອນທີ່ຊຸ່ມ

ໃຊ້ຜ້າປຽກຄຸມໄວ້ປະມານ 24 ຊົ່ວໂມງ ຈຶ່ງນຳໄປປູກຕໍ່ ປະລິມານ ຫົວພັນທີ່ໃຊ້ ປະມານ 400 ກິໂລ/ ເຮັກຕາ.

ການບົວລະບັດຮັກສາ:

- ການໃສ່ຝຸ່ນ: ພືດດັ່ງກ່າວຕ້ອງການຝຸ່ນພໍສົມຄວນ ດັ່ງນັ້ນການກຳນົດຝຸ່ນເພື່ອນຳໃຊ້ແມ່ນມີຄວາມຈຳເປັນໃຫ້ຖືກຕ້ອງ ແນ່ໃສການລົດຕົ້ນທຶນການຜະລິດ ແລະ ມີປະສິດທິຜົນສູງດ້ານການຜະລິດ ໂດຍສະເພາະການຈະເລີນເຕີບໂຕ ທາງດ້ານໃບ ຫຼື ລຳຕົ້ນ. ດັ່ງນັ້ນຈຶ່ງແນະນຳໃຫ້ໃຊ້ຝຸ່ນ N: P: K ສູດ 20-10-10 ; 46-00-00 ຫຼື ຝຸ່ນທີ່ໃກ້ຄຽງກັນນີ້ ໃນຈຳນວນ 600 ກິໂລ/ຮຕ ໂດຍແບງໃສ່ 2 ເທື່ອ:
  ເທື່ອ1 ໃສ່ເຄິ່ງໜຶ່ງເປັນຝຸ່ນຮອງພື້ນຕອນປູກ ແລ້ວພວນດິນປົກ.
  ເທື່ອທີ 2 ໃຫ້ໃສເມື່ອພືດມີອາຍຸ ປະມານ 10- 20 ວັນ ຈຳນວນທີ່ເຫຼືອຄັ້ງທຳອິດ ພ້ອມນີ້ອາດຈະເພີ່ມຝຸ່ນ ຢູ ເຣຍອີກ 60ກລ/ຮຕ ເພື່ອເລັ່ງການຈະເລີນເຕີບໂຕແລະໃບ.
- ການໃຫ້ນ້ຳ:
  ຄວນໃຫ້ຢ່າງພຽງພໍ ແຕ່ຢ່າໃຫ້ປຽກຈົນເກີນໄປ ໂດຍເບິ່ງຄວາມຊຸ່ມໃນໜານປູກໃຫ້ມີຄວາມຊຸ່ມສະໝ່ຳສະເໝີ
- ການພວນດິນກຳຈັດຫຍ້າ: ຄວນເຮັດໃນໄລຍະທຳອິດ ຫຼັງປູກໄດ້ປະມານ 3 ອາທິດ ເພື່ອໃຫ້ດິນລຸລ່ວງຟຸຜົງ ສາມາດລະບາຍອາກາດ ແລະ ນ້ຳໄດ້ດີ ພ້ອມກັບການກຳຈັດຫຍ້າໄປພ້ອມກັນ.
- ການຄຸມດິນ: ສຳລັບປົ່ວແບ່ງ ຈຳເປັນຕ້ອງຄຸມດິນໃຫ້ ເພື່ອເກັບຮັກສາຄວາມຊຸ່ມຊື່ນຂອງດິນເປັນການປະຢັດການໃຫ້ນ້ຳ ແລະ ປ້ອງກັນການເກີດຂອງຫ້ຍາ, ໂດຍໃຊ້ເຟືອງ ຫຼື ຫ້ຍາແຫ້ງ.
- ການເກັບກ່ຽວ: ປົ່ວແບ່ງທີ່ໃຊ້ບໍລິໂພກແບບຜັກສົດ ແມ່ນມີອາຍຸປະມານ 40-45 ວັນ ຫຼັງ ປູກຄວນເລືອກເກັບຕົ້ນທີ່ໃຫ່ຍໄດ້ຂະໜາດທີ່ແຕກກຳໃໝ່ທີ່ມີສີຂຽວສົດ.

# ເຕັກນິກການປູກຫອມປ້ອມ ( Coriander )



ຫອມປ້ອມ ເປັນຜັກທີ່ໃຊ້ບໍລິໂພກພາກສ່ວນ ໃບ, ລຳຕົ້ນ, ຮາກ ແລະ ກ້ານ ບໍລິໂພກເປັນຜັກສົດ. ໃຊ້ປະກອບອາຫານໄດ້ຫຼາຍຢ່າງ ເຮັດໃຫ້ມີກິ່ນຫອມ ແລະ ມີລົດຊາດດີ.

**ລັກສະນະທົ່ວໄປ:**

ຫອມປ້ອມ ຈັດເປັນຜັກຢູ່ໃນຕະກຸນ Umbelliferae ມີຊື່ທີ່ເອີ້ນກັນທາງວິທະຍາສາດວ່າ *Coriandrum sativa Linn.* ຫອມປ້ອມເປັນພືດ ລົ້ມລຸກ ອາຍຸສັ້ນ ອາຍຸປະມານ 40-60 ວັນ. ລຳຕົ້ນ, ຮາກ, ໃບ, ກ້ານ, ດອກ ແລະ ເມັດ ມີກິ່ນຫອມ. ສາມາດນຳໃຊ້ເປັນສະໝຸນໄພ ແລະ ປະກອບເຂົ້າໃນການປຸງແຕ່ງອາຫານ ໄດ້ຫຼາຍຊະນິດ. ຫອມປ້ອມສາມາດປູກ ແລະ ຈະເລີນເຕີບໂຕໄດ້ໃນດິນເກືອບທຸກສະນິດ, ແຕ່ດິນທີ່ເໝາະສົມທີ່ສຸດແມ່ນດິນຊາຍແກມຕົມ ສາມາດລະບາຍນ້ຳໄດ້ດີ ແຕ່ວ່າໃຫ້ດິນມີຄວາມຊຸ່ມຊື່ນພໍສົມຄວນ.

**ແນວພັນ:** ທີ່ໃຊ້ປູກໃນບ້ານຮວມມີຄື:

- ພັນພື້ນເມືອງ: ມີລັກສະນະຕົ້ນນ້ອຍ, ໃບບາງ, ເມັດນ້ອຍ, ອອກດອກໄວ, ອາຍຸສັ້ນ ແລະ ມີກິ່ນຫອມຫຼາຍ.
- ພັນອາຟຣິກາ: ມີລັກສະນະຕົ້ນໃຫ່ຍ, ໃບໃຫ່ຍໜາ, ກິ່ນຫອມເລັກນ້ອຍ, ອາຍຸຍາວກ່ວາພັນພື້ນເມືອງ.

**ການຕຽມດິນ:**

ຫອມປ້ອມເປັນພືດທີ່ມີລະບົບຮາກຕື້ນ ຄວນໄຖ-ຂຸດດິນເລິກປະມານ 15-20 ຊຕມ. ຕາກດິນໄວ້ 5-7 ວັນ. ໃສ່ຝຸ່ນຄອກ ຫຼື ຝຸ່ນບົ່ມທີ່ສະຫຼາຍຕົວແລ້ວ ປົນເຂົ້າກັບດິນໃຫ້ທົ່ວ ຄາດ ຫຼື ປະສົມດິນໃຫ້ລະອຽດ ເພື່ອໃຫ້ມີຄວາມສະດວກໃນການປູກ.

**ການຕຽມເມັດພັນ:**

ຫອມປ້ອມແມ່ນຂະຫຍາຍພັນດ້ວຍເມັດ ກ່ອນທີ່ຈະປູກ ຕ້ອງຕຽມ ເມັດພັນໃຫ້ພ້ອມກ່ອນ ໂດຍການເຮັດໃຫ້ເມັດແຕກອອກຈາກກັນກ່ອນ ແລ້ວແຊ່ນ້ຳໄວ້ 1 ຄືນ.

**ການປູກ:**

ກ່ອນປູກຕ້ອງຫົດນ້ຳໃຫ້ທົ່ວໜານ ນຳເອົາເມັດຫອມປ້ອມທີ່ແຊ່ນ້ຳໄວ້ 1 ຄືນ ນັ້ນ ຫ່ວານລົງໜານທີ່ຕຽມໄວ້ ແລ້ວເອົາດິນທີ່ລະອຽດ ຫຼື ແກບປົກບາງໆ ຈາກນັ້ນປົກດ້ວຍເຟືອງແຫ້ງອີກຊັ້ນໜຶ່ງ, ຫົດນ້ຳອີກເທື່ອໜຶ່ງ. ການປູກຫອມປ້ອມໃນລະດູຝົນ ຕ້ອງເຮັດຮົ່ມກັນຝົນ ແຕ່ຕ້ອງໃຫ້ໄດ້ຮັບແສງສະຫ່ວາງ ( ແສງແດດ ) ແຕ່ເວລາ 6:00-10:00 ໂມງເຊົ້າ ແລະ 14:00-18 ໂມງແລງ. ຕອນແດດກ້າ ເວລາ 10:00-14:00 ໂມງສວາຍ ຕ້ອງໃຫ້ມີຮົ່ມ.

**ການບົວລະບັດຮັກສາ:**

- *ການໃຫ້ນ້ຳ:* ຄວນໃຫ້ຢ່າງພຽງພໍ ແຕ່ຢ່າໃຫ້ປຽກຈົນເກີນໄປ ໂດຍເບິ່ງຄວາມຊຸ່ມຊື່ນ ໃນໜານປູກ.

ການໃສ່ຝຸ່ນ:

ພືດດັ່ງກ່າວນີ້ຕ້ອງການຝຸ່ນພໍສົມຄວນດັ່ງນັ້ນການກຳນົດຝຸ່ນເພື່ອນຳໃຊ້ແມ່ນມີຄວາມຈຳເປັນໃຫ້ຖືກຕ້ອງ ແນໃສການລົດຕົ້ນທຶນການຜະລິດ ແລະ ໃຫ້ປະສິດທິພາບ ສູງດ້ານ ການຜະລິດ ໂດຍສະເພາະການຈະເລີນເຕີບໂຕທາງດ້ານໃບ ແລະ ທາງກ້ານ ຫຼືລຳຕົ້ນດັ່ງນັ້ນຈຶ່ງເນາະ ນຳໃຫ້ໃຊ້ຝຸ່ນ N:P:K ສູດ 20-11-11ຫຼື 16-8-8 ຫຼືສູດທີ່ໃກ້ຄຽງກັນນີ້ ໃນຈຳນວນ 600 ກລ/ຮຕໂດຍແບ່ງໃສ່ 3 ເທື່ອ ເທື່ອທີ 1 ໃສ່ເຄິ່ງໜຶ່ງ ເປັນຝຸນຮອງພື້ນແລ້ວປູກແລ້ວພວນດິນປົກ ເທື່ອທີ 2 ໃຫ້ໃສ່ເມື່ອພືດມີອາຍຸ 10-20 ວັນຈຳນວນເຄິ່ງໜຶ່ງສ່ວນທີ່ເຫຼືອຄັ້ງທຳອິດ ພ້ອມນີ້ອາດຈະເພີ່ມຝຸ່ນຢູເຣຍອີກ 50-60 ກລ/ຮຕເພື່ອເລັ່ງກາຈະເລີນເຕີບໂຕລຳຕົ້ນ ແລະ ໃບ. ເທື່ອທີ 3 ໃສ່ເມື່ອອາຍ20- 30 ວັນຈາກສ່ວນທີ່ເຫຼືອໃນເບື້ອງຕົນນັ້ນ.

- *ການພວນດິນກຳຈັດຫຍ້າ:* ຄວນເຮັດໃນໄລຍະທຳອິດເພື່ອເຮັດໃຫ້ດິນລຸລ່ວງຜຸຜົງລະບາຍອາກາດ ແລະນ້ຳໄດ້ດີ ພ້ອມກັບການກຳຈັດຫຍ້າໄປພ້ອມກັນ. ເມື່ອຕົ້ນພືດມີໃບປົກຄຸມດິນ ແລ້ວ ບໍ່ຈຳເປັນຕ້ອງເຮັດເລີຍ.

ການເກັບກ່ຽວ:



ເນື່ອງຈາກວ່າຫອມປ້ອມໃຊ້ທຸກສ່ວນບໍລິໂພກ ຄວນດ້ວຍມືໃຫ້ໝົດຕົ້ນ. ກ່ອນຫຼົກຄວນ ຫົດໃຫ້ດິນຊຸ່ມເສຍກ່ອນ ເພື່ອສະດວກໃນການຫຼົກ.